**ຜູ້ຊີ້ນຳ**

ປທ. ນ. ບຸນມີ ຈຸນລະຈັກ

**ຄະນະບັນນາທິການ**

ປອ. ດາວສະຫວັນ ເຄືອມີໄຊ

ປອ. ສີສົມພອນ ວົງພະຈັນ

ປທ. ນ. ວະໄລລັກ ອະໄພ

**ກອງບັນນາທິການ**

ປທ. ສະນຸກສິນ ໂກສີພັນ

ນ. ພູວຽງ ແກ້ວສີມີໄຊ

ນ. ດອກໄມ້ ຈັນດາລາ

**ກອງເລຂາ**

ນ. ພູວຽງ ແກ້ວສີມີໄຊ

**ຈັດໜ້າ**

ລຳພູນ ຖຸນໄຊຍາ

**ຈຳໜ່າຍ**

ນ. ດອກໄມ້ ຈັນດາລາ

ພຸດທະພອນ ລິນອຸໄທ

**ຮູບພາບ**

ນ. ທິດດາວອນ ດວງປະເສີດ

**ແປສາລະບານ**

ລຳພູນ ຖຸນໄຊຍາ

**ຮູບພາບໜ້າປົກ**

ຊົມເຊີຍວັນປູກຕົ້ນໄມ້ແຫ່ງຊາດ
ແລະວັນເດັກນ້ອຍສາກົນ 1 ມິຖຸນາ
ທີ່ ສະຖາບັນການເມືອງ
ແລະການປົກຄອງແຫ່ງຊາດ ຄັ້ງວັນທີ
31 ພຶດສະພາ 2024

**ສຳນັກງານ**

ສູນຂໍ້ມູນຂ່າວສານ
ສະຖາບັນການເມືອງແລະ
ການປົກຄອງແຫ່ງຊາດ
ບ້ານທ່າງ່ອນ ເມືອງໄຊທານີ
ນະຄອນຫຼວງວຽງຈັນ
ໂທລະສັບ/ແຟັກ: 021 752352
020 29994161
ອີເມລ:
Valasan.nappa@yahoo.com
ເວບໄຊ: www.nappa.gov.la

# ສາລະບານ

ໄຊສະຫວາດ ສຸດທິວົງ: ໝູນໃຊ້ແນວຄິດໄກສອນ ພົມວິຫານເຂົ້າໃນການກໍ່ສ້າງພັກດ້ານການເມືອງ-ແນວຄິດ........ 1

ຄຳໝັ້ນ ພອນວິໄລຄຳ: ເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ ຢູ່ເມືອງພູກູດ ແຂວງຊຽງຂວາງ........ 6

ຖາວອນ ພົມມະຈະລືນ: ຍົກສູງຄຸນນະພາບວຽກງານຊາວໜຸ່ມ ຢູ່ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ........ 10

ຫຼຽນທອງ ອິນທະປະສິດ: ກໍ່ສ້າງ-ບຳລຸງພະນັກງານ-ລັດຖະກອນ ຢູ່ພະແນກພາຍໃນແຂວງບໍ່ແກ້ວໃຫ້ເຕີບໃຫຍ່ເຂັ້ມແຂງເທື່ອລະກ້າວ........ 16

ນ. ດອກໄມ້ ຈັນດາລາ: ບາງຜົນສຳເລັດທີ່ພົ້ນເດັ່ນໃນການຈັດຕັ້ງປະຕິບັດວຽກງານຊາວໜຸ່ມ ຢູ່ຄະນະຊາວໜຸ່ມ ປປ ລາວ ແຂວງຫຼວງນ້ຳທາ........ 23

ນ. ມະນີໃສ ວິລະຈິດ: ແນວຄິດໄກສອນ ພົມວິຫານ ຕໍ່ກັບການສຶກສາອົບຮົມພະນັກງານ........ 29

ບຸນນ້ອຍ ສີລາ: ເພີ່ມທະວີບົດບາດການນຳພາຂອງຄະນະພັກຕໍ່ວຽກງານພະນັກງານ ຢູ່ກອງບັນຊາການທະຫານແຂວງສາລະວັນ........ 35

ຄຳແປງ ມີຕ້າ: ການສົ່ງເສີມວັດທະນະທຳອັນດີງາມຂອງບັນດາເຜົ່າ ຢູ່ເມືອງສິງແຂວງຫຼວງນ້ຳທາ........ 42

ພອນສຸກ ແກ້ວຍະສານ: ກໍ່ສ້າງ ແລະບຳລຸງພະນັກງານ, ຄູ-ອາຈານຢູ່ໂຮງຮຽນການເມືອງແລະການປົກຄອງແຂວງຜົ້ງສາລີ........ 47

ນ. ຖານະສັກ ສໍວົງສະກຸນ: ຍົກສູງຄຸນທາດການເມືອງຂອງພະນັກງານ, ສະມາຊິກພັກ ຢູ່ເມືອງຕຸ້ມລານ ແຂວງສາລະວັນ........ 52

ໜໍສະຫວັດ ເພັດມະນີ: ຍົກສູງຄຸນນະພາບ ແລະຄວາມຮູ້, ຄວາມສາມາດຂອງພະນັກງານ-ລັດຖະກອນ ຢູ່ເມືອງວຽງພູຄາ ແຂວງຫຼວງນ້ຳທາ........ 57

ນ. ສີອຳພອນ ແກ້ວບົວໄຂ: ເສີມຂະຫຍາຍຂະບວນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີຂອງສະຫະພັນແມ່ຍິງ ຢູ່ແຂວງຄຳມ່ວນ........ 62

ສົມຫວັງ ທໍ່: ເພີ່ມທະວີການໂຄສະນາ ເຜີຍແຜ່ສຶກສາອົບຮົມກົດໝາຍໃຫ້ປະຊາຊົນບັນດາເຜົ່າ ຢູ່ແຂວງໄຊຍະບູລີເພື່ອຍົກສູງສະຕິເຄົາລົບໃຫ້ສູງຂຶ້ນ...... 69

ທອງດີ ບູ້ກໍອີ່ລົງ: ສົ່ງເສີມການທ່ອງທ່ຽວທຳມະຊາດແບບຍືນຍົງ ຢູ່ແຂວງຫຼວງນ້ຳທາ........ 74

ພູວຽງ ໄຊຍະແສງສາ: ຍົກສູງຄຸນນະພາບການນຳພາຂອງການຈັດຕັ້ງຮາກຖານພັກ ຢູ່ເມືອງອາດສະພອນ ແຂວງສະຫວັນນະເຂດ........ 80

ນ. ເພັງລິຕາ ມາລາວົງ: ຍົກສູງບົດບາດຕິດຕາມ-ກວດກາໂຄງການລົງທຶນຂອງລັດຢູ່ແຂວງອັດຕະປື (ຕໍ່ຈາກສະບັບປະຈຳເດືອນ 05/2024)........ 86

ເສັງຊົ່ງ ແພຫຼວງ: ຍົກສູງຄຸນນະພາບວຽກງານເສນາທິການຂອງຫ້ອງວ່າການເມືອງອະນຸວົງ ແຂວງໄຊສົມບູນ........ 90

# ບາງຜົນສຳເລັດທີ່ພົ້ນເດັ່ນໃນການຈັດຕັ້ງປະຕິບັດວຽກງານ ຊາວໜຸ່ມ ຢູ່ຄະນະຊາວໜຸ່ມ ປປ ລາວ ແຂວງຫຼວງນ້ຳທາ

ຮຽບຮຽງໂດຍ: ນ. ດອກໄມ້ ຈັນດາລາ

ຊາວໜຸ່ມແມ່ນໄວທີ່ມີຄວາມຫ້າວຫັນ, ມີກຳລັງແຮງທີ່ໜຸ່ມແໜ້ນ, ມີໄຫວພິບ, ມີແນວຄິດທີ່ແຫຼມຄົມ ແລະກາຍເປັນແກນກາງໃນການຈັດຕັ້ງປະຕິບັດໃນທຸກໆວຽກງານ, ເປັນກຳລັງປະຈັນບານຟົດຟື້ນປະຕິວັດ, ມີມູນເຊື້ອພິລະອາດຫານບໍ່ຍອມຈຳນົນ ແລະມີຄວາມສາມັກຄີເປັນປຶກແຜ່ນ, ມີຄວາມຂະຫຍັນຂັນແຂງ ແລະກາຍເປັນກຳລັງແຮງໜູນ ໃນການປະຕິບັດວຽກງານຕ່າງໆ, ມີບັນຍາກາດຟົດຟື້ນ, ຖ້າຫາກຂາດກຳລັງແຮງຂອງຊາວໜຸ່ມປະກອບສ່ວນ ກໍຍາກທີ່ຈະເຮັດໃຫ້ແຜນງານຕ່າງໆສາມາດບັນລຸຜົນຕາມເປົ້າໝາຍທີ່ໄດ້ກຳນົດໄວ້; ປະທານ ໄກສອນ ພົມວິຫານໄດ້ໃຫ້ນາມມະຍົດວ່າ: “ຊາວໜຸ່ມປຽບເໝືອນນົກອິນຊີທີ່ບໍ່ຫວັ່ນກົວຕໍ່ພາຍຸລົມແດງ ຈິ່ງກາຍເປັນສິນໄຊແຫ່ງຍຸກສະໄໝ”(1) ພັກປະຊາຊົນ ປະຕິວັດລາວໃນຖານະທີ່ເປັນແກນນຳອັນສູງສຸດໃນລະບົບການເມືອງ, ເວລາໃດກໍເປັນຫ່ວງເປັນໄຍນຳທຸກອົງການຈັດຕັ້ງເວົ້າລວມ, ເວົ້າສະເພາະແມ່ນອົງການຈັດຕັ້ງຊາວໜຸ່ມ ຍ້ອນເຫັນໄດ້ວ່າອົງການຈັດຕັ້ງຊາວໜຸ່ມແມ່ນອົງການຈັດຕັ້ງໜຶ່ງທີ່ມີຄວາມສຳຄັນຕໍ່ພັກ ຕິດພັນກັບໜ້າທີ່ການເມືອງ, ເປັນເສນາທິການ, ເປັນກຳລັງປະຈັນບານ, ເປັນແຂນຂວາຂອງພັກ, ເປັນຜູ້ສືບທອດທີ່ດີ ແລະໄວ້ເນື້ອເຊື່ອໃຈຂອງພັກ, ປະທານ ໄກສອນ ພົມວິຫານ ໄດ້ເນັ້ນໜັກຕື່ມວ່າ: “ນົກອິນຊີຈິ່ງສືບຕໍ່ບິນຂຶ້ນສູງ, ບິນໃຫ້ໄກສູ່ບົນທ້ອງຟ້າຂອງປະເທດຊາດ, ສິນໄຊທັງຫຼາຍຂອງຍຸກສະໄໝໃໝ່ຈິ່ງນຳເອົາຄວາມສະຫງ່າລາສີມາສູ່ປະເທດຊາດ ແລະສ້າງອານະຄົດສົດໃສໃຫ້ແກ່ຄົນຮຸ່ນໜຸ່ມພວກເຮົາ, ໃຫ້ຊາວໜຸ່ມຈິ່ງດຳລົງບົດບາດປະຈັນບານ, ປະດິດສ້າງ, ປະຕິວັດ ແລະຂອງປະຊາຊົນລາວວິລະຊົນ”(2). ມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກໄດ້ໃຫ້ທັດສະນະວ່າ: “ການຈັດຕັ້ງຊາວໜຸ່ມໄດ້ກາຍເປັນເບົ້າຫຼໍ່ແຫ່ງການສ້າງ, ເຝິກຝົນຫຼໍ່ຫຼອມຖັນແຖວພະນັກງານໜຸ່ມໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ ແລະເຕີບໃຫຍ່ໃນການນຳພາຕົວຈິງ ເພື່ອຕອບສະໜອງບຸກຄະລາກອນປະຕິວັດຮຸ່ນສືບທອດທີ່ມີຄຸນນະພາບໃຫ້ແກ່ການຈັດຕັ້ງແຕ່ລະຂັ້ນ”(3).

ຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວແຂວງ ແມ່ນອົງການຄຸ້ມຄອງວຽກງານຂອງຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວຂັ້ນ

---

(1) ສູນທອນພົດຂອງປະທານໄກສອນ ພົມວິຫານ ຕໍ່ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດຄັ້ງທີ I, ປີ 1983, ໜ້າ 46-47.

(2) ເອກະສານກອງປະຊຸມໃຫຍ່ຄັ້ງທີ II ຂອງຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ປີ 1983, ໜ້າ 25.

(3) ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 79.

ແຂວງມີຖານະທຽບເທົ່າກັບບັນດາພະແນກການອ້ອມຂ້າງແຂວງ, ເຄື່ອນໄຫວພາຍໃຕ້ລັດຖະທຳມະນູນ ແລະກົດໝາຍແຫ່ງ ສປປລາວ, ພາຍໃຕ້ການນຳພາ-ຊີ້ນຳໂດຍກົງຮອບດ້ານຂອງຄະນະພັກແຂວງ, ຄະນະເລຂາທິການ, ຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ, ປະສານສົມທົບກັບອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະອົງການຈັດຕັ້ງມະຫາຊົນບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະສະເໝີພາບ "ປັດຈຸບັນທົ່ວແຂວງຫຼວງນໍ້າທາ ມີພະນັກງານຊາວໜຸ່ມອາຊີບທັງໝົດ 85 ສະຫາຍ, ຍິງ 37 ສະຫາຍ, ຂັ້ນເມືອງ 56 ສະຫາຍ, ຍິງ 18 ສະຫາຍ, ມີສະມາຊິກຊາວໜຸ່ມທັງໝົດ 26.458 ສະຫາຍ, ຍິງ 12.271 ສະຫາຍ, ຂະຫຍາຍໃໝ່ໄດ້ ຈຳນວນ 1.593 ສະຫາຍ, ຍິງ 798 ສະຫາຍ, ທຽບໃສ່ 5 ປີຂະຫຍາຍໄດ້ 100%, ທົ່ວແຂວງມີຮາກຖານຊາວໜຸ່ມ 579 ຮາກຖານ, ໃນນັ້ນມີ 1 ພະແນກຊາວໜຸ່ມ ປກຊ ແລະ 1 ຄະນະບໍລິຫານງານຊາວໜຸ່ມ ປກສ ແຂວງ, ມີ 22 ຄະນະຊາວໜຸ່ມຮາກຖານ ແລະ 24 ໜ່ວຍຊາວໜຸ່ມຮາກຖານ, ຂັ້ນເມືອງມີ 531 ຮາກຖານ"[(1)]. ໃນໄລຍະຜ່ານມາຄະນະບໍລິຫານງານຊາວໜຸ່ມ ແຂວງຫຼວງນໍ້າທາ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳຊາວໜຸ່ມ-ເຍົາວະຊົນເຂົ້າຮ່ວມການເຄື່ອນໄຫວວຽກງານຂະບວນການ, ກິດຈະກຳຕ່າງໆມີຜົນສຳເລັດສະແດງອອກດັ່ງນີ້:

1). ວຽກງານສຶກສາອົບຮົມການເມືອງ-ແນວຄິດ. ຄະນະບໍລິຫານງານຊາວໜຸ່ມແຂວງຫຼວງນໍ້າທາໄດ້ນຳເອົາບັນດາເນື້ອໃນເອກະສານແນວທາງ, ນະໂຍບາຍຂອງພັກ, ຂໍ້ກຳນົດ, ກົດໝາຍຂອງລັດ, ເອກະສານມູນເຊື້ອຂອງພັກ ຂອງຊາດແລະຂອງຊາວໜຸ່ມມາສຶກສາອົບຮົມພະນັກງານ, ສະມາຊິກຊາວໜຸ່ມໄວໜຸ່ມໄດ້ 27 ຄັ້ງ ແລະຈັດກິດຈະກຳຊຸມນຸມ ມີຜູ້ເຂົ້າຮ່ວມ ຈຳນວນ 3.508 ເທື່ອ ຄົນ, ຍິງ 2.002 ເທື່ອຄົນ, ຜ່ານການສຶກສາອົບຮົມການເມືອງ-ແນວຄິດເຫັນວ່າສະມາຊິກຊາວໜຸ່ມທຸກຂົງເຂດວຽກງານ ແລະຮາກຖານບ້ານມີແນວຄິດອຸ່ນອຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງພັກ ແລະປະຕິບັດກົດໝາຍ ແລະລະບຽບຂອງລັດຢ່າງເຂັ້ມງວດ; ພ້ອມກັນນັ້ນ, ກໍໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາ ແລສ້າງສາພັດທະນາທ້ອງຖິ່ນຂອງຕົນເອງຢ່າງບໍ່ຢຸດຢັ້ງ.

2). ວຽກງານຫ້ອງການ-ບໍລິຫານເປັນເສນາທິການ, ເປັນໃຈກາງປະສານງານ ແລະບໍລິຫານຮັບໃຊ້ ລະຫວ່າງຂັ້ນລຸ່ມກັບຂັ້ນເທິງໃນການຮ່າງເນື້ອໃນເອກະສານ ແລະນິຕິກຳຕ່າງໆໄດ້ 1.769 ສະບັບ,ຂຶ້ນທະບຽນເອກະສານຂາເຂົ້າ ຈຳນວນ 615 ສະບັບ ແລະຂາອອກ ຈຳນວນ 1.769 ສະບັບ;ວຽກງານກອງທຶນສົ່ງເສີມ ແລະພັດທະນາຊາວໜຸ່ມ-ເຍົາວະຊົນພາຍໃນແຂວງຫຼວງນໍ້າທາ ແນໃສ່ການລະດົມ, ຂົນຂວາຍ ແລະສະສົມທຶນ ເພື່ອຊຸກຍູ້ສົ່ງເສີມຊາວໜຸ່ມ-ເຍົາວະຊົນ ສ້າງເສດຖະກິດຄອບຄົວໃຫ້ມີຢູ່ມີກິນຢ່າງຖາວອນ, ປັດຈຸບັນມີສະ

---

(1) ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານ ຄຊປປລ ແຂວງຫຼວງນໍ້າທາ, ປີ 2023 ແລະທິດທາງແຜນການປີ 2024, ໜ້າ 5.

ມາຊິກກອງທຶນຈຳນວນ 68 ສະຫາຍ, ມີເງິນກອງທຶນຈຳນວນ 106.152.000 ກີບ, ປ່ອຍໃຫ້ສະມາຊິກກູ້ຢືມ ທັງໝົດ 83.350.000 ກີບ ແລະປັດຈຸບັນຢູ່ຄັງຍັງມີເງິນໝູນວຽນ ຈຳນວນ 22.802.000 ກີບ; ສຳເລັດໂຄງການກໍ່ສ້າງຫໍພັກນັກຮຽນໃຫ້ໂຮງຮຽນມັດທະຍົມຊຽງກົກເມືອງລອງມູນຄ່າການກໍ່ສ້າງທັງໝົດ 552.824.000 ກີບ, ຈັດຊື້ອຸປະກອນຮັບໃຊ້ວຽກງານສື່ມວນຊົນ ແລະເຍົາວະຊົນອານຸຊົນ ມູນຄ່າ 96.000.000 ກີບແລະໄດ້ຮັບເງິນເກີນແຜນປະຈຳປີ 2022 ມູນຄ່າ 100.000.000 ກີບ ເພື່ອສ້າງຄວາມເຂັ້ມແຂງທາງດ້ານວິຊາການ.

3). ວຽກງານໂຄສະນາອົບຮົມ, ຂະບວນການ ແລະສື່ມວນຊົນ. ເຊື່ອມຊຶມເຜີຍແຜ່ປາຖະກະຖາມູນເຊື້ອຂອງຊາດ-ຂອງພັກ, ນິຕິກຳ ແລະເອກະສານຕ່າງໆ ຈຳນວນ 24 ຄັ້ງ, ມີຜູ້ເຂົ້າຮ່ວມຮັບຟັງຈຳນວນ 3.317 ເທື່ອຄົນ, ຍິງ 1.722 ເທື່ອຄົນ, ລົງຖ່າຍພາບ ແລະເກັບກຳຂໍ້ມູນການເຄື່ອນໄຫວຂອງຄະນະຊາວໜຸ່ມ ປປ ລາວແຂວງ, ຄະນະຊາວໜຸ່ມຮາກຖານ ແລະໜ່ວຍຮາກຖານຊາວໜຸ່ມ ປປ ລາວ ອ້ອມຂ້າງແຂວງມາຂຽນເປັນສາລະໜ້າຮູ້ໄດ້ 21 ບົດ, ຂຽນຂ່າວໄດ້ 42 ຂ່າວ, ຮຽບຮຽງບົດ 7 ບົດ, ຮັບຂ່າວຈາກບັນດາເມືອງ 78 ຂ່າວຄື: ເມືອງຫຼວງນ້ຳທາ ຈຳນວນ 15 ຂ່າວ, ເມືອງສິງ ຈຳນວນ 21 ຂ່າວ, ເມືອງລອງ 21 ຂ່າວ, ເມືອງວຽງພູຄາ ຈຳນວນ 13 ຂ່າວ ແລະເມືອງນາແລ ຈຳນວນ 8 ຂ່າວ; ລົງຂ່າວຜ່ານທາງເຟສບຸກຂອງຄະນະຊາວໜຸ່ມ ປປ ລາວ ແຂວງໄດ້ 42 ຂ່າວ, ສົ່ງຂ່າວໃຫ້ສູນກາງຊາວໜຸ່ມ ປປ ລາວ ແລະພະແນກຖະແຫຼງຂ່າວວັດທະນະທຳ ແລະທ່ອງທ່ຽວແຂວງໄດ້ 39 ຂ່າວ ແລະຈັດລາຍການວິທະຍຸ (FM) ເພື່ອນຊາວໜຸ່ມໄດ້ 26 ຄັ້ງ.

4). ວຽກງານເຍົາວະຊົນ-ອະນຸຊົນ. ທົ່ວແຂວງຫຼວງນ້ຳທາມີໄວອະນຸຊົນທັງໝົດ 6.313 ນ້ອງ ເທົ່າກັບ 3% ຂອງຈຳນວນປະຊາກອນທົ່ວແຂວງ, ມີສະມາຊິກອະນຸຊົນ 3.732 ນ້ອງ, ຍິງ 1.878 ນ້ອງ, ຂະຫຍາຍອະນຸຊົນໄດ້ 2.113 ນ້ອງ, ຍິງ 1.129 ນ້ອງ, ທົ່ວແຂວງມີໄວເຍົາວະຊົນທັນວາທັງໝົດ 19.689 ນ້ອງ, ເທົ່າກັບ 9,4% ຂອງຈຳນວນປະຊາກອນທົ່ວແຂວງ, ມີສະມາຊິກເຍົາວະຊົນທັງໝົດ 11.470 ນ້ອງ, ຍິງ 5.661 ນ້ອງ, ມີກອງເຍົາວະຊົນ 168 ກອງ, 382 ໝວດ, 1.147 ໝູ່, ຂະຫຍາຍສະມາຊິກເຍົາວະຊົນທັນວາ ເຂົ້າເປັນສະມາຊິກຊາວໜຸ່ມ ປປ ລາວ ຈຳນວນ 3.626 ນ້ອງ, ຍິງ 1.641 ນ້ອງ, ມີ 40 ກອງ, 120 ໝວດ, 362 ໝູ່, ໄດ້ປະເມີນກອງເຍົາວະຊົນ 3 ດີ 4 ຮູ້ຈຳນວນ 135 ກອງ, 405 ໝວດ, 1.215 ໝູ່, ມີສະມາຊິກເຍົາວະຊົນ 3 ດີ 4 ຮູ້ ຈຳນວນ 9.180 ນ້ອງ, ຍິງ 5.173 ນ້ອງ, ມີກອງເຍົາວະຊົນນຳໜ້າ 40 ກອງ, ເລື່ອນເຍົາວະຊົນ ເຂົ້າເປັນສະມາຊິກຊາວໜຸ່ມ ປປ ລາວ ຈຳນວນ 1.593 ສະຫາຍ, ຍິງ 798 ສະຫາຍ, ຫຼຸບໃສ່ 5 ປີ ສາມາດຂະຫຍາຍໄດ້ 100%; ມີຜູ້ຮັບຜິດຊອບວຽກງານເຍົາວະຊົນ 276 ສະຫາຍ, ຍິງ 215 ສະຫາຍ, ຂັ້ນແຂວງ 5 ສະຫາຍ, ຍິງ 4 ສະຫາຍ, ຂັ້ນເມືອງ 12 ສະຫາຍ, ຍິງ 7 ສະຫາຍ, ຂັ້ນໂຮງຮຽນ 259 ສະຫາຍ, ຍິງ 201 ສະຫາຍ, ທົ່ວແຂວງມີເປົ້າໝາຍຂະຫຍາຍກອງເຍົາວະຊົນ 455 ແຫ່ງ, ໃນນີ້, ມີການຈັດຕັ້ງກອງເຍົາວະຊົນແລ້ວ 405 ແຫ່ງ, ຍັງບໍ່ທັນມີການຈັດຕັ້ງ (ໂຮງຮຽນຂາວ) 50 ແຫ່ງ ແລະໃນໄລຍະຜ່ານມາສາມາດຈັດຕັ້ງປະຕິບັດວຽກ

ງານໄດ້ດັ່ງນີ້:

ຕິດຕາມ, ຊຸກຍູ້ ແລະແນະນຳການຈັດຕັ້ງປະຕິບັດວຽກງານ 3 ດີ 4 ຮູ້ ຂອງເຍົາວະຊົນ-ອານຸຊົນໄດ້ 42 ຄັ້ງຄື: ເມືອງຫຼວງນ້ຳທາ ຈຳນວນ 12 ຄັ້ງ, ເມືອງສິງ ຈຳນວນ 8 ຄັ້ງ, ເມືອງລອງ ຈຳນວນ 8 ຄັ້ງ, ເມືອງນາແລ 6 ຄັ້ງ ແລະເມືອງວຽງພູຄາ 8 ຄັ້ງ, ມີຜູ້ເຂົ້າຮ່ວມຈຳນວນ 7.408 ຄົນ, ຍິງ 3.504 ຄົນ, ນຳພານ້ອງນ້ອຍເຍົາວະຊົນເຝິກຊ້ອມກອງດູລິຍາງ ໄດ້ 15 ຄັ້ງມີ 180 ເທື່ອນ້ອງ, ຍິງ 90 ເທື່ອນ້ອງ, ຈັດກິດຈະກຳກິລາ-ວັນນະຄະດີ ເພື່ອຊຸກຍູ້ສົ່ງເສີມພອນສະຫວັນຂອງຫຼານນ້ອຍ ເຍົາວະຊົນ-ອະນຸຊົນທັນວາໄດ້ 58 ຄັ້ງ, ມີຜູເຂົ້າຮ່ວມຈຳນວນ 1.213 ນ້ອງ, ຍິງ 1.741 ນ້ອງ ແລະສຳເລັດງານພົບປະຕັ້ງຄ້າຍມິດຕະພາບເຍົາວະຊົນທັນວາ 4 ແຂວງພາກເໜືອເຂດ 1 ຄັ້ງທີ VII ຮອບທີ II ທີ່ແຂວງຫຼວງນ້ຳທາເປັນເຈົ້າພາບ, ມີແຂວງຫຼວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ ແລະຜົ້ງສາລີ, ມີຜູ້ເຂົ້າຮ່ວມທັງໝົດ 1.650 ເທື່ອສະຫາຍ, ຍິງ 896 ເທື່ອສະຫາຍ,

5). ວຽກງານພັດທະນາວິຊາຊີບ. ຜ່ານການເກັບກຳສະຖິຕິຊາວໜຸ່ມເຫັນວ່າທົ່ວແຂວງມີຊາວໜຸ່ມທີ່ຫວ່າງງານ, ຈຳນວນ 2.267 ຄົນ, ຍິງ 688 ຄົນ, ໄດ້ຈັດສົ່ງຊາວໜຸ່ມຫວ່າງງານ, ຜູ້ດ້ອຍໂອກາດ, ຜູທຸກຍາກ, ຂາດເຂີນຈຳນວນ 14 ຄົນ, ຍິງ 7 ຄົນເຂົ້າຮ່ວມເຝິກອົບຮົມວິຊາຊີບຄື:ສາຂາປຸງແຕ່ງ-ບໍລິການໂຮງແຮມ ຈຳນວນ 3 ຄົນ, ຊ່າງເສີມສວຍ ຈຳນວນ 1 ຄົນ, ເປັນຍິງ, ຊ່າງໄຟຟາ ຈຳນວນ 2 ຄົນ, ຊ່າງສ້ອມແປງລົດໃຫຍ່ ຈຳນວນ 2 ຄົນ, ລົດຈັກ ຈຳນວນ 3 ຄົນ ແລະຊ່າງຕັດຫຍິບ 3 ຄົນເປັນຍິງ, ຢູ່ສູນເຝິກອົບຮົມວິຊາຊີບດອນບອສໂກ-ມາອິນທີ່ນະຄອນຫຼວງວຽງຈັນ; ສຳເລັດການຈັດເຝິກອົບຮົມຄອມພິວເຕີຂັ້ນພື້ນຖານ Microsoft Word, Microsoft Excel, ການສ້າງເອກະສານທາງລັດຖະການຫຼັກສູດລະບົບ 2 ເດືອນໃຫ້ແກ່ພະນັກງານຊາວໜຸ່ມ ປປ ລາວ ແຂວງ, ຄະນະຊາວໜຸ່ມ ປປ ລາວ ບັນດາເມືອງ ແລະຮາກຖານຊາວໜຸ່ມອ້ອມຂ້າງແຂວງ; ເຂົ້າຮ່ວມເຝິກອົບຮົມຫຼັກການເຮັດວຽກແບບທັນສະໄໝຂອງ ສປ ຈີນ ຈຳນວນ 1 ສະຫາຍ ເປັນຍິງ, ເຝິກອົບຮົມວຽກງານ ໄອທີ (MS Word, Excel ແລະ power Point) ຢູ່ສູນເຕັກໂນໂລຊີຂໍ້ມູນຂ່າວສານຊາວໜຸ່ມ-ເຍົາວະຊົນ ສູນກາງ ຊປປ ລາວ ຈຳນວນ 3 ສະຫາຍເປັນຍິງ, ເຝິກອົບຮົມຫຼັກສູດການບໍລິຫານຄຸ້ມຄອງລັດ ສຳລັບຜູ້ບໍລິຫານລະດັບສູງ ໃຫ້ແກ່ພະນັກງານຫຼັກແຫຼ່ງຂອງແຂວງ ຈຳນວນ 3 ສະຫາຍ, ຍິງ 2 ສະຫາຍ, ສຳເລັດການເປີດ-ປິດການຮຽນ-ການສອນພາສາຈີນຂັ້ນພື້ນຖານ ຊຸດທີ II, III, ມີ 4 ຫ້ອງໃນລະບົບ 1 G ແລະ 2 G ວັນສຸກ ແລະມອບໃບຢັ້ງຢືນຫຼັກສູດ ພາສາຈີນ ລະບົບ1 G ແລະ 2 G ໃຫ້ນັກຮຽນທັງໝົດ ຈຳນວນ 59 ຄົນ, ຍິງ 31 ຄົນ.

6). ວຽກງານກວດກາ. ສຳເລັດການຕິດຕາມ, ກວດກາແຜນການກະກຽມ, ນິຕິກຳ, ຂັ້ນຕອນການດຳເນີນກອງປະຊຸມໃຫຍ່ຂອງຄະນະຊາວໜຸ່ມ ປປ ລາວ ຂັ້ນເມືອງ, ຄະນະຊາວໜຸ່ມ ປປ ລາວ ຮາກຖານ ແລະໜ່ວຍຮາກຖານຊາວໜຸ່ມ ປປ ລາວ ອ້ອມຂ້າງແຂວງ ຈຳນວນ 23 ຄັ້ງ, ໃນນັ້ນຂັ້ນຄະນະຊາວໜຸ່ມຮາກຖານ 13 ຮາກຖານ ແລະຂັ້ນໜ່ວຍ 10 ຮາກຖານ, ຮັບເອກະສານບົດລາຍງານການເມືອງ ຈຳນວນ 23 ບົດ ແລະລົງຊຸກຍູ້ກອງປະຊຸມໃຫຍ່ຂັ້ນເມືອງໄດ້ 3 ຄັ້ງຄື: ເມືອງຫຼວງນ້ຳທາ, ເມືອງວຽງພູຄາ ແລະເມືອງລອງ; ຕິດຕາມ, ຊຸກຍູ້ຄະ

ນະຊາວໜຸ່ມ ປປ ລາວ 5 ເມືອງ, ຄະນະຊາວໜຸ່ມ ປປ ລາວ ຮາກຖານ ແລະໜ່ວຍຮາກຖານຊາວໜຸ່ມ ປປ ລາວ ອ້ອມຂ້າງແຂວງ ປະເມີນຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2023 ເຊິ່ງສາມາດສະຫຼຸບລວມຜົນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ ແຂວງປະຈຳປີ 2023 ທົ່ວແຂວງສາມາດຈັດຕັ້ງປະຕິບັດໄດ້ດັ່ງນີ້ ທົ່ວແຂວງມີ 45 ກຸ່ມບ້ານ ແລະມີ 352 ບ້ານ 34.564 ຄອບຄົວ ຜ່ານການປະເມີນ ຂໍ້ແຂ່ງຂັນ 4 ບຸກ ທົ່ວແຂວງປະຕິບັດໄດ້ 86,97% ບໍ່ບັນລຸ 64 ບ້ານ ກວມເອົາ 13,03% ສຳລັບຂັ້ນເມືອງ ບັນລຸ 100%.

7). ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ. ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ: ຄະນະຊາວໜຸ່ມປປ ລາວ ແຂວງ, ຄະນະຊາວໜຸ່ມ ປປລາວ ເມືອງ, ຄະນະຊາວໜຸ່ມ ປປ ລາວ ຮາກຖານ ແລະໜ່ວຍຮາກຖານຊາວໜຸ່ມ ປປ ລາວ ອ້ອມຂ້າງແຂວງ, ໄດ້ເອົາໃຈໃສ່ນຳພາສະມາຊິກຊາວໜຸ່ມ-ເຍົາວະຊົນຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນດ້ວຍຄວາມຮັບຜິດຊອບສູງ ໂດຍສຸມໃສ່ແກ້ໄຂບັນຫາດັ່ງກ່າວໃຫ້ບັນລຸຕາມຈຸດປະສົງ ແລະລະດັບຄາດໝາຍຕາມແຜນຈຸດສຸມຂອງແຂວງວາງອອກ, ລະດົມສົ່ງເສີມສະມາຊິກຊາວໜຸ່ມໃຫ້ມີແນວຄິດປະຢັດມັດທະຍັດ, ຕ້ານການຟູມເຟືອຍ, ພ້ອມທັງເສີມຂະຫຍາຍທ່າແຮງການຜະລິດ ແລະການຊົມໃຊ້ພາຍໃນໃຫ້ຫຼາຍຂຶ້ນ ເພື່ອຫຼຸດຜ່ອນການນຳເຂົ້າ, ປະຕິບັດຕາມແຈ້ງການຂອງຫ້ອງວ່າການແຂວງ ເລກທີ 61/ຫວຂ, ລົງວັນທີ 8 ກຸມພາ 2023 ວ່າດ້ວຍເນື້ອໃນຈິດໃຈມະຕິກອງປະຊຸມຄົບຄະນະ (ເປີດກວ້າງ) ຄັ້ງທີ II ຂອງຄະນະບໍລິຫານງານພັກແຂວງສະໄໝທີ VIII, ຫ້າມດື່ມເຄື່ອງດື່ມທີ່ມີທາດມຶນເມົາ (ແອວກໍຮໍ) ໃນວັນລັດຖະການ, ເພີ່ມປະສິດທິພາບໃນການເຄື່ອນໄຫວວຽກງານຊາວໜຸ່ມ-ເຍົາວະຊົນ, ຕາມສິດ, ພາລະບົດບາດ ແລະໜ້າທີ່ຂອງຕົນ, ສຸມໃສ່ໃນການພັດທະນາຊາວໜຸ່ມ-ໄວໜຸ່ມ ແລະເຍົາວະຊົນໃຫ້ມີຄຸນນະພາບ ໂດຍຕິດພັນກັບ ການຫັນເປັນທັນສະໄໝ ແລະມີຊີວິດແບບໃໝ່ທີ່ສົດໃສ.

ການສະກັດກັ້ນ ແລະແກ້ໄຂບັນຫາຢາເສບຕິດ: ຄະນະຊາວໜຸ່ມ ປປ ລາວແຂວງ, ຄະນະຊາວໜຸ່ມ ປປ ລາວ ເມືອງ, ຄະນະຊາວໜຸ່ມຮາກຖານ ແລະໜ່ວຍຊາວໜຸ່ມຮາກຖານອ້ອມຂ້າງແຂວງ, ໄດ້ເອົາໃຈໃສ່ລົງໂຄສະນາເຜີຍແຜ່ເຖິງຜົນຮ້າຍຂອງຢາເສບຕິດ, ເພື່ອເຮັດໃຫ້ບັນຫາຢາເສບຕິດ ໃນໝູ່ຊາວໜຸ່ມ-ໄວໜຸ່ມ ແລະເຍົາວະຊົນໃຫ້ຫຼຸດໜ້ອຍຖອຍລົງໄປຈາກສັງຄົມ ໃຫ້ສະມາຊິກຊາວໜຸ່ມ-ໄວໜຸ່ມ ແລະເຍົາວະຊົນບັນດາເຜົ່າ ພາຍໃນແຂວງຫຼວງນໍ້າທາ, ດ້ວຍຫຼາຍຮູບການ, ເປັນຕົ້ນແມ່ນໂຄສະນາຜ່ານທາງວິທະຍຸ (FM), ລາຍການເພື່ອນຊາວໜຸ່ມ, ລົງໂຄສະນາເຜີຍແຜ່ ຢູ່ບັນດາໂຮງຮຽນ ຈຳນວນ 7 ຄັ້ງ, ມີສະມາຊິກຊາວໜຸ່ມ-ເຍົາວະຊົນເຂົ້າຮ່ວມຮັບຟັງທັງໝົດ 2.249 ສະຫາຍ, ຍິງ 1.143 ສະຫາຍ, ເຮັດໃຫ້ສະມາຊິກຊາວໜຸ່ມ-ເຍົາວະຊົນໄດ້ຮັບຮູ້ ແລະເຂົ້າໃຈເຖິງຜົນຮ້າຍຂອງຢາເສບຕິດ.

ຜ່ານການຈັດຕັ້ງປະຕິບັດວຽກງານຊາວໜຸ່ມຢູ່ແຂວງຫຼວງນໍ້າທາ ເຖິງແມ່ນວ່າໄດ້ມີຜົນສຳເລັດຫຼາຍດ້ານ, ແຕ່ຍັງມີບາງດ້ານຄວນປັບ

ປຸງເປັນຕົ້ນແມ່ນ:

1). ການນຳພາ-ຊີ້ນຳຂອງຄະນະບໍລິຫານງານຊາວໜຸ່ມ ປະຊາຊົນ ປະຕິວັດລາວ ແຕ່ລະຂັ້ນບໍ່ທັນໄດ້ດຳເນີນຢ່າງເປື່ອງນິດລຽນຕິດ, ບໍ່ທັນທົ່ວເຖິງ ໂດຍສະເພາະແມ່ນຢູ່ຂັ້ນຮາກຖານ, ຢູ່ຊົນນະບົດຫ່າງໄກສອກຫຼີກເຂດຊົນເຜົ່າ; ດ້ານເນື້ອໃນ, ຮູບການ ແລະວິທີການສຶກສາອົບຮົມຍັງບໍ່ທັນອຸດົມສົມບູນ, ຫຼາຍຮູບຫຼາຍສີ ແລະແທດເໝາະກັບຈຸດພິເສດດ້ານຈິດຕະສາດຂອງຊາວໜຸ່ມ; ການນຳພາ-ຊີ້ນຳຍັງຂາດການສົ່ງເສີມລັກສະນະປະດິດສ້າງ, ສ່ວນຫຼາຍແມ່ນເຮັດວຽກຕາມຄຳສັ່ງຂອງຂັ້ນເທິງ.

2). ຄະນະຊາວໜຸ່ມຢູ່ຂັ້ນຮາກຖານບ້ານຫຼາຍບ່ອນຍັງບໍ່ທັນໄດ້ຮັບການປັບປຸງ ແລະເຂັ້ມແຂງ, ພະນັກງານສະມາຊິກຊາວໜຸ່ມ-ໄວໜຸ່ມຈຳນວນໜຶ່ງຂາດຄວາມເປັນເຈົ້າການ, ຄວາມຮັບຜິດຊອບ ແລະບໍ່ທັນຕັ້ງໜ້າປະຕິບັດໜ້າທີ່ວຽກງານທີ່ຕົນເອງຮັບຜິດຊອບ; ການກໍ່ສ້າງກຳລັງປະຈັນບານ ຫຼື ກຳລັງແຮງທີ່ເປັນແຂນຂວາຂອງພັກໃນຖັນແຖວຊາວໜຸ່ມຍັງບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່, ການສ້າງຂະບວນການຂໍ້ແຂ່ງຂັນ 4 ບຸກຍັງບໍ່ທັນກວ້າງຂວາງ ແລະເປັນຂະບວນຟົດຟື້ນ; ວຽກງານເຍົາວະຊົນຮູບການສຶກສາອົບຮົມ ແລະການເຄື່ອນໄຫວບໍ່ທັນອຸດົມສົມບູນ; ການສຶກສາອົບຮົມຄຳສອນ 6 ຮັກ 3 ຊັງ ແລະຂໍ້ແຂ່ງຂັນ 3 ດີ 4 ຮູ້ໃຫ້ແກ່ນ້ອງນ້ອຍເຍົາວະຊົນຍັງບໍ່ທັນກວ້າງຂວາງ, ເລິກເຊິ່ງ ແລະເປັນລະບົບຕໍ່ເນື່ອງ.

3). ພະນັກງານທີ່ເປັນສະມາຊິກຊາວໜຸ່ມຈຳນວນໜຶ່ງຍັງຂາດຫົວຄິດປະດິດສ້າງ, ຄວາມຮູ້ດ້ານວິຊາສະເພາະ, ເຕັກນິກວິທະຍາສາດຍັງຈຳກັດ. ຍິ່ງໄປກວ່ານັ້ນ, ບາງບຸກຄົນຍັງຖືຜົນປະໂຫຍດສ່ວນຕົວສູງກວ່າສ່ວນລວມ.

4). ກົນໄກການປະສານງານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງລັດຕໍ່ກັບການພັດທະນາດ້ານການສົ່ງເສີມວິຊາຊີບຕ່າງໆໃຫ້ແກ່ສະມາຊິກຊາວໜຸ່ມຍັງບໍ່ທັນເປັນລະບົບ, ຍັງເຮັດພໍໃຜພໍລາວ, ຂາດການປະສານງານເຊິ່ງກັນແລະກັນ.

5). ພາຫະນະ, ເຄື່ອງມືທັນສະໄໝຕະຫຼອດຮອດພື້ນຖານໂຄງລ່າງ ເພື່ອຮັບໃຊ້ໃຫ້ແກ່ການປະຕິບັດໜ້າທີ່ວິຊາສະເພາະຂອງວຽກງານ ຊາວໜຸ່ມຍັງບໍ່ທັນຕອບສະໜອງເທົ່າທີ່ຄວນ; ການປະຕິບັດນະໂຍບາຍໃຫ້ແກ່ພະນັກງານຕອບສະໜອງກັບການດຳລົງຊີວິດໃນສັງຄົມ ຍັງບໍ່ທັນສອດຄ່ອງ ເຮັດໃຫ້ສະພາບແນວຄິດພະນັກງານຂາດຄວາມອຸ່ນອ່ຽນຫຸ່ນຫ່ຽງ, ຫັນໄປແລ່ນເສດຖະກິດຫຼາຍຂຶ້ນ.

6). ການກວດກາຂອງຄະນະຊາວໜຸ່ມຂັ້ນຕ່າງໆຍັງບໍ່ທັນເຄື່ອນໄຫວຢ່າງແຂງແຮງ ແລະຕັ້ງໜ້າສະແດງອອກ ບໍ່ສາມາດຈັດປະເພດຂອງໜ່ວຍຊາວໜຸ່ມ, ສະມາຊິກປະເພດແຂງ, ກາງໃຫ້ແທດເໝາະກັບການເຄື່ອນໄຫວໄດ້ຢ່າງທົ່ວເຖິງ ໂດຍສະເພາະແມ່ນເຂດຊົນນະບົດຫ່າງໄກສອກຫຼີກ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຊາວໜຸ່ມ ຢູ່ແຂວງຫຼວງນ້ຳທາໃນຕໍ່ໜ້າໜັກແໜ້ນຕາມທັດສະນະຂອງຜູ້ຂຽນແລ້ວຄວນເອົາໃຈໃສ່ບາງດ້ານດັ່ງນີ້:

ໜຶ່ງ, ການນຳພາ-ຊີ້ນຳຂອງຄະນະບໍລິຫານງານຊາວໜຸ່ມ ປະຊາຊົນ ປະຕິວັດລາວ ຄວນດຳເນີນໄປຢ່າງເປື່ອງນິດລຽນຕິດ ໂດຍເພີ່ມທະວີວຽກງານສຶກສາອົບຮົມການເມືອງ-

ແນວຄິດໃຫ້ຫຼາຍກວ່າເກົ່າ ແລະຖືເອົາວຽກງານນີ້ເປັນກົກທັງສອດຫ້ອຍເຂົ້າໃນທຸກຂົງເຂດວຽກງານ, ເພາະວ່າແນວຄິດດີການກະທຳກໍດີ. ວິທີນີ້ຈະຊ່ວຍໃຫ້ການນຳເອົາແນວທາງ, ນະໂຍບາຍຂອງພັກ, ກົດໝາຍ, ລະບຽບ, ມະຕິ, ຄຳສັ່ງຂອງຂັ້ນເທິງລົງເຜີຍແຜ່ໃຫ້ຊາວໜຸ່ມເຍົາວະຊົນຢູ່ສຳນັກງານອົງການ, ກົມກອງ ແລະຮາກຖານບ້ານຢ່າງເປັນປົກກະຕິ, ແທດເໝາະ, ກວ້າງຂວາງ ແລະເລິກເຊິ່ງ; ການສຶກສາອົບຮົມຄວນປະຕິບັດດ້ວຍຫຼາຍເນື້ອໃນໃຫ້ສອດຄ່ອງກັບແຕ່ລະກຸ່ມເປົ້າໝາຍ, ແລະຈຸດພິເສດຂອງແຕ່ລະຮາກຖານດ້ວຍການສ້າງເປັນແຜນການ, ໂຄງການ, ເປັນກິດຈະກຳຢ່າງລະອຽດໃນແຕ່ລະໄລຍະ.

ສອງ, ຄວນປັບປຸງກົງຈັກການຈັດຕັ້ງໃຫ້ໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ-ແນວຄິດ ແລະການຈັດຕັ້ງ, ຍົກສູງຄຸນນະພາບຂອງພະນັກງານ, ສະມາຊິກຊາວໜຸ່ມເຍົາວະຊົນໃຫ້ນັບມື້ສູງຂຶ້ນ; ເອົາໃຈໃສ່ດຳເນີນຊີວິດການເມືອງຢູ່ພາຍໃນໜ່ວຍ, ກົມກອງຢ່າງເປັນປົກກະຕິ, ຍຶດໝັ້ນ ແລະປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ເພື່ອສ້າງກຳລັງຊາວໜຸ່ມໃຫ້ກາຍເປັນກຳລັງປະຈັນບານ, ເປັນແຂນຂວາຂອງພັກ; ເອົາວຽກງານເຍົາວະຊົນ-ອະນຸຊົນເປັນເສນາທິການໃຫ້ຄະນະບໍລິຫານງານຊາວໜຸ່ມເມືອງໃນການຈັດຕັ້ງນຳພາການເຄື່ອນໄຫວ ແລະສຶກສາອົບຮົມເຍົາວະຊົນ-ອະນຸຊົນຕາມຄຳສອນ 6 ຮັກ 3 ຊັງ, ຂໍ້ແຂ່ງຂັນ 3 ດີ 4 ຮູ້, ຄົ້ນຄວ້າວາງແຜນປັບປຸງວຽກງານໃຫ້ສອດຄ່ອງກັບໜ້າທີ່ການເມືອງຂອງພັກແຕ່ລະໄລຍະ, ປັບປຸງເນື້ອໃນ, ວິທີການສຶກສາອົບຮົມ ແລະຮູບການຂະຫຍາຍການຈັດຕັ້ງໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງຂຶ້ນເທື່ອລະກ້າວ.

ສາມ, ການກໍ່ສ້າງ ແລະບຳລຸງຖັນແຖວພະນັກງານຕ້ອງຮັບປະກັນລັກສະນະຄົບຊຸດ ແລະຮອບດ້ານ; ເອົາໃຈໃສ່ສ້າງພະນັກງານຊາວໜຸ່ມຢ່າງເປັນລະບົບ, ສ້າງພະນັກງານວິຊາການ, ໃຫ້ມີລັກສະສືບທອດຕໍ່ເນື່ອງ ແລະຮັບປະກັນໄດ້ໂຄງປະກອບ ລະຫວ່າງເພດ-ເຜົ່າ, ຍົກລະດັບ ແລະກໍ່ສ້າງພະນັກງານທັງ 3 ປະເພດຄື: ພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະພະນັກງານວິຊາການໂດຍເລັ່ງໃສ່ 3 ດ້ານຄື: ດ້ານການເມືອງ-ແນວຄິດ, ດ້ານວິຊາສະເພາະ ແລະດ້ານວັດທະນະທຳ-ສັງຄົມ, ຕິດພັນກັບພາສາຕ່າງປະເທດ, ຮູ້ນຳໃຊ້ເຕັກໂນໂລຊີການສື່ສານ ແລະຄວາມອາດສາມາດໃນການຈັດຕັ້ງປະຕິບັດວຽກງານ ເພື່ອເປັນກຳລັງໜູນກະຕຸກຊຸກຍູ້ພະນັກງານມີຄວາມຈູບຈ້າວຫ້າວຫັນໃນການປະຕິບັດວຽກງານ, ຍົກສູງນ້ຳໃຈຮັບຜິດຊອບ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງເຂົາເຈົ້າໄດ້ເປັນຢ່າງດີ.

ສີ່, ຄວນປະສານກັບພາກສ່ວນຕ່າງໆເພື່ອຈັດເຝິກອົບຮົມໃຫ້ແກ່ຊາວໜຸ່ມດ້ານຕ່າງໆ ເພື່ອເປັນການຊ່ວຍເຂົາເຈົ້າມີວຽກເຮັດງານທຳ ກໍຄືຊ່ວຍພັດທະນາໃຫ້ເຂົາເຈົ້າມີຄວາມຮູ້, ຄວາມສາມາດໃນລະດັບໜຶ່ງທີ່ປະກອບອາຊີບສ້າງລາຍໄດ້ໃຫ້ແກ່ຕົນເອງ ທັງປະກອບສ່ວນໃນການພັດທະນາເສດຖະກິດ-ສັງ ຄົມຂອງຊາດເວົ້າລວມ, ເວົ້າສະເພາະແມ່ນພັດທະນາທ້ອງຖິ່ນ ແລະຄອບຄົວໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກຕາມນະໂຍບາຍຂອງພັກ ແລະລັດໄດ້ກຳນົດໄວ້.

ຫ້າ, ຄວນສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການພັດທະນາຊາວໜຸ່ມ-ເຍົາວະຊົນ ເຊິ່ງປັດໄຈພື້ນຖານທີ່ຈຳເປັນກວ່າໝູ່ແມ່ນ

ພື້ນຖານໂຄ່ງລາງ ແລະວັດຖຸອຸປະກອນຕ່າງໆ ເຊັ່ນ: ສະໂມສອນຊາວໜຸ່ມໄວໜຸ່ມ ແລະ ເຍົາວະຊົນ-ອະນຸຊົນ, ພາຫະນະຮັບໃຊ້ທີ່ຈຳເປັນ, ງົບປະມານຕອບສະໜອງຈາກກອງທຶນພັດທະນາຊາວໜຸ່ມ ຫຼື ຈາກໂຄງການຊ່ວຍເຫຼືອລ້າ, ທັງວັດຖຸອຸປະກອນຈຳນວນໜຶ່ງເພື່ອຮັບໃຊ້ໃຫ້ແກ່ການໂຄສະນາເຜີຍແຜ່, ເຄື່ອນໄຫວສຶກສາອົບຮົມ.

ຫົກ, ຄວນປັບປຸງວຽກງານກວດກາໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງກວ່າເກົ່າ ເພາະວ່າວຽກງານກວດກາແມ່ນວຽກງານໜຶ່ງ ທີ່ມີພາລະບົດບາດສຳຄັນ ໃນການກະຕຸກຊຸກຍູ້ແຕ່ລະຂົງເຂດວຽກງານໃຫ້ປະສົບຜົນສຳເລັດໄດ້, ສະນັ້ນ, ຄວນຮູ້ເຄື່ອນໄຫວຕາມພາລະບົດບາດຂອງຕົນໃຫ້ເປັນປົກກະຕິ ເປັນຕົ້ນແມ່ນເຂົ້າຮ່ວມບັ້ນດຳເນີນຊີວິດການເມືອງ, ຕິລາຄາສະມາຊິກຊາວໜຸ່ມ, ໜ່ວຍຊາວໜຸ່ມ ແລະການຈັດຕັ້ງປະຕິບັດກົດລະບຽບຂອງຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວໃຫ້ເປັນປົກກະຕິ ແລະຕໍ່ເນື່ອງ.

ເຈັດ, ຫັນເອົາແຜນຍຸດທະສາດການພັດທະນາວຽກງານຊາວໜຸ່ມ-ເຍົາວະຊົນ, ໂດຍຕິດພັນການກັບ 2 ວາລະແຫ່ງຊາດ, ທີ່ເປັນໜ້າທີ່ລວມທົ່ວສັງຄົມ, ພ້ອມທັງຍາດແຍ່ງການສະໜັບສະໜູນທຶນຮອນທາງດ້ານວັດຖຸ, ປັດໄຈຈາກທາງພາກລັດ, ເອກະຊົນ ຕາມແຜນການໃຫ້ປາກົດຜົນເປັນຈິງ.

ສັງລວມແລ້ວ, ການຈັດຕັ້ງປະຕິບັດວຽກງານຊາວໜຸ່ມ ແມ່ນກົດເກນແຫ່ງການຂະຫຍາຍຕົວພາວະວິໄສ, ວຽກງານນີ້ເປັນວຽກງານທີ່ຈະຕ້ອງໄດ້ເຮັດເປັນປະຈຳ, ໂດຍອີງໃສ່ແນວທາງ, ນະໂຍບາຍຂອງພັກ-ລັດ ແລະອີງໃສ່ສະພາບຄວາມເປັນຈິງຂອງແຕ່ລະໄລຍະເພື່ອຄວາມສອດຄ່ອງ ແລະກົມກຽວກັນລະຫວ່າງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານກັບການສະໜອງທາງດ້ານຄວາມຮູ້, ຄວາມສາມາດ ແລະຄຸນສົມບັດຂອງບຸກຄະລາກອນ; ສະນັ້ນ, ເພື່ອເຮັດໃຫ້ອົງການຈັດຕັ້ງຊາວໜຸ່ມປະຊາຊົນ ປະຕິວັດລາວໄດ້ມີການປ່ຽນແປງທີ່ດີ, ມີການເຄື່ອນໄຫວຢ່າງຖືກຕ້ອງ ແລະສອດຄ່ອງກັບເງື່ອນໄຂປັດຈຸບັນຖືກຕາມພາລະບົດບາດຂອງຕົນໃນຖານະເປັນແຂນຂວາຂອງພັກ, ເປັນກະດູກສັນຫຼັງຂອງປະເທດຊາດ, ຄະນະພັກ, ອົງການປົກຄອງແຕ່ລະຂັ້ນຕ້ອງໄດ້ເອົາໃຈໃສ່ຢ່າງໃກ້ຊິດ ແລະເປັນປະຈຳ, ພ້ອມທັງເອື້ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຕ່າງໆຂອງອົງການຈັດຕັ້ງຊາວໜຸ່ມ.

# ແນວຄິດໄກສອນ ພົມວິຫານ ຕໍ່ກັບການສຶກສາອົບຮົມພະນັກງານ

ຮຽບຮຽງໂດຍ: ນ. ມະນີໃສ ວິລະຈິດ

ພັກເຮົາຍາມໃດກໍຖືບັນຫາສາມັກຄີ ບັນດາເຜົ່າເປັນບັນຫາຍຸດທະສາດ, ເປັນສ່ວນປະກອບສຳຄັນທີ່ສຸດໃນນະໂຍບາຍສາມັກຄີປອງດອງຊາດໃນໄລຍະໃໝ່ນີ້, ໄປຄຽງຄູ່ກັບການສຶກສາອົບຮົມ, ຍົກລະດັບຄວາມຕື່ນຕົວຮັກຊາດ, ຮັກລະບອບໃໝ່. ນັບແຕ່ພັກປະຊາຊົນລາວ (ພັກປະຊາຊົນ ປະຕິວັດລາວ) ໄດ້ຮັບການສ້າງຕັ້ງຂຶ້ນ ໃນວັນທີ 22 ມີນາ 1955 ພັກກໍໄດ້ໃຫ້ຄວາມສຳຄັນຕໍ່ວຽກງານພະນັກງານໃນທຸກປະເພດ ພັກໄດ້ໃຫ້ທັດສະນະວ່າ: ພະນັກງານເປັນກ້ອນທຶນອັນປະເສີດຂອງພັກ, ຂອງປະຊາຊົນ, ເປັນຜູ້ຕັດສິນຜົນໄດ້ຜົນເສຍໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະລະບຽບຂອງລັດ. ໃນພຶດຕິກຳຕົວຈິງໄດ້ສະແດງໃຫ້ເຫັນວ່າພະນັກງານເປັນຜູ້ເຜີຍແຜ່ສຶກສາອົບຮົມ, ເປັນຜູ້ຈັດຕັ້ງປະຕິບັດ, ເປັນຜູ້ເກັບກຳລວບລວມລາຍງານສ່ອງແສງ ແລະຄົ້ນຄວ້າສະເໜີວິທີການແກ້ໄຂ ບໍ່ວ່າຈະຢູ່ໃນຂົງເຂດວຽກງານໃດຈະດີ ຫຼື ອ່ອນນັ້ນ, ຊ້າ ຫຼື ໄວ, ມີປະສິດທິຜົນ ຫຼື ບໍ່ນັ້ນແມ່ນຂຶ້ນກັບພະນັກງານເປັນຜູ້ຕັດສິນ. ປະທານໄກສອນ ພົມວິຫານ ເວົ້າວ່າ: “ກ່ອນອື່ນໝົດຕ້ອງຍົກສູງຄຸນສົມບັດປະຕິວັດຂອງພະນັກງານ, ສະມາຊິກພັກ, ບຳລຸງຫຼັກໝັ້ນແນວຄິດກຳມະຊີບ, ຕຳນິວິຈານປາກົດການຕົ້ນຕໍຈຳນວນໜຶ່ງຂອງລັດທິເອກະຊົນ”[1]; ເພິ່ນຍັງໄດ້ເວົ້າອີກວ່າ: “ຖ້າຫາກວ່າກະໂຕຂອງພະນັກງານຫາກບໍ່ທັນເຊື່ອໝັ້ນຕໍ່ແນວທາງຂອງພັກແລ້ວ, ແນວໃດກໍບໍ່ສາມາດອະທິບາຍແນວທາງ, ນະໂຍບາຍຂອງພັກ, ໂຄສະນາຊວນເຊື່ອມະຫາຊົນ ແລະປຸກລະດົມມະຫາຊົນປະຕິບັດໄດ້”[2]. ແນວຄິດໄກສອນ ພົມວິຫານ ກ່ຽວກັບພະນັກງານແມ່ນພື້ນຖານແນວຄິດທິດສະດີຂອງພັກແມ່ນທອນໄຟເຍືອງທາງໃນການກຳນົດຍຸດທະສາດກ່ຽວກັບວຽກງານພະນັກງານຂອງພັກ ທັງແມ່ນຍຸດທະສາດໃນການພັດທະນາຖັນແຖວພະນັກງານໃຫ້ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການປະຕິວັດໃນແຕ່ລະໄລຍະ, ແນວຄິດ ແລະທັດສະນະຂອງເພິ່ນໄດ້ຖືກຫັນເປັນແນວທາງປ່ຽນແປງໃໝ່ຂອງພັກເຮົາ.

ຜ່ານພຶດຕິກຳຕົວຈິງຂອງການປະຕິວັດປະເທດເຮົາ, ບັນດາພັກກອມມູນິດ ແລະກຳມະກອນສາກົນລ້ວນແຕ່ໄດ້ຢັ້ງຢືນວ່າພະນັກງານແມ່ນມີບົດບາດສຳຄັນທີ່ສຸດ ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: “ໃນພາລະກິດປ່ຽນແປງໃໝ່ທັງໝົດຂອງພັກເຮົານັ້ນ, ການດັດແປງພະນັກງານເປັນຂອດທີ່ມີບົດບາດສຳຄັນທີ່ສຸດ, ມັນແມ່ນປັດໄຈໜຶ່ງທີ່ຕັດສິນໄຊຊະນະ ຫຼື ການປະລາໄຊຂອງພາລະກິດປ່ຽນແປງໃໝ່

---

(1) ສູນທອນພົດຂອງສະຫາຍ ໄກສອນ ພົມວິຫານ ກ່າວໃນໂອກາດພິທີເປີດຊຸດເຝິກອົບຮົມປົວແປງພະນັກງານຂັ້ນກາງ, ຂັ້ນສູງ ຊຸດທຳອິດ, ໃນວັນທີ 11 ພະຈິກ ປີ 1976, ໜ້າ 7.

(2) ສູນທອນພົດຂອງສະຫາຍ ໄກສອນ ພົມວິຫານ ກ່າວໃນໂອກາດອັດຊຸດຮຽນບຳລຸງທິດສະດີ ໃຫ້ແກ່ພະນັກງານຂັ້ນສູງຂອງພັກ-ລັດ ຊຸດທີ 5, ໃນວັນທີ 22 ຕຸລາ ປີ 1985, ໜ້າ 4.

ຂອງພັກເຮົາ ເພາະວ່າພະນັກງານເປັນສິ່ງຕັດສິນທຸກຢ່າງ, ການຈັດຕັ້ງຈະດີໄດ້ກໍຕ້ອງມີຄົນທີ່ດີ, ການຈັດຕັ້ງຈະເຂັ້ມແຂງໄດ້ ກໍຕ້ອງມີຄົນທີ່ເຂັ້ມແຂງເຊັ່ນດຽວກັນ”[1]. ຍ້ອນແນວນັ້ນ, ປະທານ ໄກສອນ ພົມວິຫານ ຈຶ່ງໄດ້ເອົາໃຈໃສ່ໃກ້ຊິດຕິດແທດ ແລະໃຫ້ຄວາມສຳຄັນຕໍ່ການສຶກສາອົບຮົມພະນັກງານ ສະແດງອອກດັ່ງນີ້:

ໃນການໂອ້ລົມຕໍ່ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 2 ສະໄໝທີ IV ປະທານ ໄກສອນ ພົມວິຫານ ໄດ້ເວົ້າເຖິງພະນັກງານການນຳວ່າ: “ຜູ້ນຳຕ້ອງເປັນແບບຢ່າງຮອບດ້ານເພື່ອໃຫ້ສະມາຊິກຜູ້ອື່ນເອົາເປັນແບບຢ່າງ”, “ສິ່ງທີ່ຄວນຫຼີກເວັ້ນແທ້ໃນຂົງເຂດຄຸນສົມບັດສິນທຳແມ່ນປາກຫວານດັ່ງນ້ຳອ້ອຍ, ໃຈສົ້ມດັ່ງໝາກນາວ, ຄວາມເວົ້າບໍ່ສອດຄ່ອງກັບການກະທຳ, ມີແຕ່ໂຄສະນາຄຸນສົມບັດສິນທຳແບບນ້ຳເຕົ້າເປົ່າ, ຕັກເຕືອນສັ່ງສອນຜູ້ອື່ນຕ້ອງເຮັດແບບນັ້ນແບບນີ້ ແຕ່ຕົນເອງຊ້ຳພັດບໍ່ເປັນແບບຢ່າງ”[2]. ໃນກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IV ວັນທີ 30 ມັງກອນ 1989 ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: “ການສ້າງພະນັກງານບໍ່ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງຕົນ; ດັ່ງນັ້ນ, ຂະແໜງການທີ່ສຳຄັນ ແລະຈຳເປັນຈຳນວນໜຶ່ງຈຶ່ງຂາດພະນັກງານເຊັ່ນ: ຂະແໜງການກະສິກຳ-ປ່າໄມ້, ຂະແໜງການທີ່ຍັງບໍ່ທັນມີຄວາມຈຳເປັນພັດໄດ້ສ້າງພະນັກງານຂຶ້ນແລ້ວເຊັ່ນ: ຂະແໜງທາງລົດໄຟ... ແລະພ້ອມດຽວກັນນີ້ກໍບໍ່ທັນເອົາໃຈໃສ່ສ້າງພະນັກງານເຕັກນິກ ແລະກຳມະກອນຊຳນານງານທີ່ແທດເໝາະກັບຄວາມຮຽກຮ້ອງຕ້ອງການໃນປັດຈຸບັນ, ການບຳລຸງພະນັກງານເວົ້າລວມແລ້ວແມ່ນຍັງເຮັດບໍ່ທັນໄດ້ດີ, ບໍ່ທັນມີແຜນການກຳນົດ ລວມທັງການກໍ່ສ້າງ-ບຳລຸງຢູ່ພາຍໃນ ແລະຕ່າງປະເທດ, ການສ້າງພະນັກງານຍັງບໍ່ທັນຕິດພັນກັບພຶດຕິກຳ, ດ້ວຍເຫດນັ້ນພະນັກງານຂອງພວກເຮົາມີຫຼາຍອັນຍັງອ່ອນ ເຊິ່ງເຮັດໃຫ້ປະສິດທິຜົນຂອງວຽກງານມີການຈຳກັດທາງດ້ານຄວາມຮູ້, ຄວາມສາມາດ, ການກຳນົດແນວທາງ, ແຜນນະໂຍບາຍຂອງພັກບໍ່ໜັກແໜ້ນ, ການຈັດຕັ້ງປະຕິບັດກໍຍັງອ່ອນ, ບໍ່ຄ່ອຍຕິດແທດຕົວຈິງ, ຕິດແທດມະຫາຊົນ, ຫ່າງເຫີນຈາກຮາກຖານ, ເຮັດໃຫ້ວຽກງານຜົວເຜີນພໍແລ້ວມື້ແລ້ວວັນ, ການຈັດວາງ, ນຳໃຊ້ພະນັກງານເຮັດບໍ່ທັນໄດ້ດີ, ນຳໃຊ້ບໍ່ຖືກຕາມວິຊາສະເພາະ, ສ່ວນຫຼາຍພະນັກງານວິຊາສະເພາະແມ່ນເຕົ້າໂຮມຢູ່ແຕ່ຂະແໜງການສູນກາງ, ສ່ວນຢູ່ທ້ອງຖິ່ນຕ່າງໆ ແລະຮາກຖານແມ່ນມີໜ້ອຍທີ່ສຸດ”[3]. ໃນງານຊຸມນຸມມິດຕິງສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 35 ປີ ວັນທີ 22 ມີນາ 1990 ປະທານ ໄກສອນ ພົມວິຫານ ໄດ້ກ່າວວ່າ: “ຕ້ອງເອົາໃຈໃສ່ກໍ່ສ້າງ, ສຶກສາອົບຮົມພະນັກງານສະມາຊິກໃນຂັ້ນຕ່າງໆ, ຂະແໜງການຕ່າງໆທາງດ້ານການເມືອງ-

---

(1) ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ III, ປີ 1997, ໜ້າ 160.

(2) ຄະນະຈັດຕັ້ງສູນກາງພັກ, ມູນເຊື້ອ 55 ປີກ່ຽວກັບວຽກງານຈັດຕັ້ງຂອງພັກ ປປ ລາວ, ປີ 2010, ໜ້າ 21.

(3) ທັນໄປສູ່ຊົນນະບົດ ແລະເປີດກວ້າງການພົວພັນຕ່າງປະເທດ ປີ 1989 ກ່ຽວກັບວຽກງານພະນັກງານຂອງສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ຕໍ່ກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IV ໃນ ວັນທີ 30 ມັງກອນ1989, ໜ້າ 186.

ແນວຄິດ, ຄວາມຮູ້, ຄວາມສາມາດ ແລະແບບແຜນວິທີເຮັດວຽກ, ບົດຮຽນ ແລະພຶດຕິກຳຂອງພວກເຮົາຢັ້ງຢືນໃຫ້ເຫັນແຈ້ງແລ້ວວ່າແນວທາງ, ແຜນນະໂຍບາຍຂອງພັກ ຈະຖືກຕ້ອງປານໃດກໍດີ ຖ້າພະນັກງານ, ສະມາຊິກພັກຫາກຂາດຄວາມຮູ້, ຄວາມສາມາດໃນດ້ານຕ່າງໆ ເພື່ອນຳພາ ແລະຈັດຕັ້ງປະຕິບັດແລ້ວ ແນວທາງ, ນະໂຍບາຍດັ່ງກ່າວນັ້ນ ກໍຈະດີພຽງແຕ່ຢູ່ໃນໜ້າເຈ້ຍເທົ່ານັ້ນ. ສະນັ້ນ, ພວກເຮົາຕ້ອງເອົາໃຈໃສ່ຕໍ່ວຽກງານກໍ່ສ້າງ ແລະເຝິກອົບຮົມພະນັກງານ, ສະມາຊິກພັກ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນສະເພາະໜ້າ ແລະຍາວນານ ໂດຍສະເພາະແມ່ນຖັນແຖວພະນັກງານນຳພາຫຼັກແຫຼ່ງໃນແຕ່ລະຂັ້ນ, ແຕ່ລະຂະແໜງການ ແລະຖັນແຖວພະນັກງານຢູ່ຮາກຖານ"[1]. ສຳລັບພະນັກງານໃໝ່, ພະນັກງານໜຸ່ມ ປະທານ ໄກສອນ ພົມວິຫານ ເວົ້າວ່າ: "ຕ້ອງສ້າງເງື່ອນໄຂ ເພື່ອໃຫ້ພະນັກງານໜຸ່ມໄດ້ຮັບການເຝິກຝົນຫຼໍ່ຫຼອມຢູ່ໃນວຽກງານຕົວຈິງ, ຕິດແທດກັບຮາກຖານ, ຕິດພັນກັບມະຫາຊົນ ແລະຜ່ານຈາກນັ້ນ ເພື່ອໃຫ້ເຂົາເຈົ້າເຕີບໃຫຍ່ຂຶ້ນເລື້ອຍໆ"[2]. ໃນການນຳໃຊ້ພະນັກງານໜຸ່ມ ເພິ່ນເວົ້າວ່າ: "ສຳລັບພະນັກງານໃໝ່ພວກເຮົາຍັງມີອັນຜິດເຂວບໍ່ຫຼາຍກໍໜ້ອຍໃນການນຳໃຊ້ພະນັກງານໃໝ່, ຍັງບໍ່ທັນສ້າງທຸກເງື່ອນໄຂໃຫ້ເຂົາເຈົ້າລົງຮາກຖານ, ລົງຕົວຈິງ ແລະເອົາຕົວເຊື່ອມເຂົ້າໃນຂະບວນການ. ແຕ່ນີ້ຕໍ່ໄປຕ້ອງຖືບັນຫານີ້ເປັນລະບອບອັນໜຶ່ງ. ພະນັກງານທີ່ໄດ້ຮັບການກໍ່ສ້າງຢູ່ໂຮງຮຽນທັງພາຍໃນ ແລະຕ່າງປະເທດນັ້ນ ເມື່ອເຂົາເຈົ້າຮຽນຈົບມາແລ້ວຕ້ອງມີລະບອບສັບຊ້ອນໃຫ້ເຂົາເຈົ້າໄປເຮັດວຽກຢູ່ທ້ອງຖິ່ນ, ຮາກຖານ 2-3 ປີສາກ່ອນ. ຕ້ອງຈັດວາງສັບຊ້ອນໃຫ້ຖືກກັບຂະແໜງວິຊາຊີບທີ່ເຂົາເຈົ້າໄດ້ຮຽນມາ"[3]. ໃນກອງປະຊຸມຄົບຄະນະ ຄັ້ງທີ 10 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IV ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: "ຕ້ອງຈັດຕັ້ງເຝິກອົບຮົມຖັນແຖວພະນັກງານວິຊາການພັດທະນາຊົນນະບົດ; ພ້ອມກັນນັ້ນ, ກໍເອົາໃຈໃສ່ວຽກງານຂ່າວສານ, ສະຫຼຸບຖອດຖອນບົດຮຽນຕົວຈິງ ແລະເຝິກອົບຮົມໄລຍະສັ້ນ ສຳລັບພະນັກງານເຫຼົ່ານັ້ນ, ອຳນວຍເງື່ອນໄຂ ເພື່ອໃຫ້ພະນັກງານວິຊາການພັດທະນາຊົນນະບົດໄດ້ເຄື່ອນໄຫວເປັນເວລາຍາວນານຢູ່ຮາກຖານ"[4]. ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7 ປະທານ ໄກສອນ ພົມວິຫານ ໄດ້ຕີລາຄາວ່າ: "ນ້ຳໃຈຟົດຟື້ນປະຕິວັດໃນຖັນແຖວພະນັກງານ, ສະມາຊິກຈຳນວນໜຶ່ງໄດ້ຫຼຸດຜ່ອນລົງ ສະແດງອອກໃນຄວາມບໍ່ຕັ້ງໃຈເຝິກຝົນຫຼໍ່ຫຼອມຕົນເອງ, ຮັກສາແບບແຜນນຳພາທີ່ເຄີຍປະຕິບັດມາ ແຕ່ສະໄໝສົງຄາມ, ຂາດຄວາມຫ້າວຫັນ, ເປັນແບບຢ່າງນຳໜ້າ, ຂີ້ຄ້ານຄົ້ນຄິດ, ຂີ້ຄ້ານຮ່ຳຮຽນຊອກຫາຄວາມຮູ້ອັນໃໝ່, ຍິ່ງໄປກວ່ານັ້ນມີຈຳນວນໜຶ່ງອີກຊ້ຳພັດເສຍທາດຂາດຄຸນ, ເມົາມົວສະແຫວງຫາແຕ່ຜົນປະໂຫຍດສ່ວນຕົວທີ່ບໍ່ຊອບທຳ, ສ້

[1] ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ III, ປີ 1997, ໜ້າ 358, 359.

[2] ເອກະສານກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກປະຊາຊົນ ປະຕິວັດລາວ, ປີ 1986, ໜ້າ 208.

[3] ເອກະສານຂອງກອງປະຊຸມຄົບຄະນະຄັ້ງທີ 5 ຂອງຄະນະບໍລິຫານງານສູນກາງພັກ (ສະໄໝທີ IV) 1988, ໜ້າ 376, 385.

[4] ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ III, ປີ 1997, ໜ້າ 429.

ລາດບັງຫຼວງ, ກິນສິນບົນ, ແລ່ນນໍາແຕ່ເງິນຄໍາ, ປ່ອຍປະໜ້າທີ່ວຽກງານ ຫຼື ຕິດແປດພະຍາດອາດຍາສິດ, ລ່ວງອໍານາດ, ບໍ່ເປັນຫ່ວງເປັນໄຍເຖິງຄວາມເປັນຕາຍຮ້າຍດີຂອງປະຊາຊົນ”[(1)].

ເພື່ອເຮັດໃຫ້ລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ເປັນພື້ນຖານ, ເປັນເຂັມຊີ້ທິດເຍືອງທາງໃນການເຄື່ອນໄຫວຂອງພັກ ແລະການປະຕິວັດລາວ ພັກເຮົາໄດ້ຄົ້ນຄວ້າ ແລະທັນເປັນອັນລະອຽດໂດຍຜ່ານເນື້ອໃນກອງປະຊຸມໃຫຍ່ແຕ່ລະຄັ້ງ. ໃນກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 8 ໄດ້ເວົ້າວ່າ: “ສໍາລັບພະນັກງານ ຜູ້ທີ່ຮຽນຈົບວິຊາສະເພາະຊັ້ນສູງຂຶ້ນໄປ ຕ້ອງສືບຕໍ່ບໍາລຸງສ້າງເຂົາເຈົ້າທາງດ້ານທິດສະດີການເມືອງ, ທິດສະດີມາກ-ເລນິນ, ອຸດົມການປະຕິວັດ, ນໍ້າໃຈຮັກຊາດ, ຈິດໃຈເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະອື່ນໆ”[(2)]. ສໍາລັບ “ພະນັກງານອາວຸໂສປະຕິວັດ, ຜູ້ທີ່ເຄີຍຊຸບຫຼູ່ໃນແປວໄຟປະຕິວັດແຫ່ງການຕໍ່ສູ້ກູ້ຊາດ, ຈົ່ງຕັ້ງໜ້າເສີມຂະຫຍາຍມູນເຊື້ອເດັດດ່ຽວກ້າແກ່ນ, ຄວາມເດັດຂາດໜັກແໜ້ນຂອງຕົນປະກອບສ່ວນເຂົ້າໃນການສຶກສາອົບຮົມຈິດໃຈຮັກຊາດແພງເຊື້ອ, ທັດສະນະຫຼັກໝັ້ນປະຕິວັດໃຫ້ແກ່ຊາວໜຸ່ມ-ເຍົາວະຊົນ, ເປັນຄັນທຸງເຕົ້າໂຮມຄວາມສາມັກຄີໃນໝູ່ພະນັກງານ ແລະປະຊາຊົນ”[(3)]. ໃນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ກໍໄດ້ເວົ້າວ່າ: “ພັກເຮົາຍິ່ງຈໍາເປັນຕ້ອງມີຖັນແຖວພະນັກງານ ທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດ, ມີທາດແທ້ຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຢ່າງຊຸດຊື້ງຕໍ່ປະເທດຊາດ ແລະພາລະກິດຂອງພັກ, ມີນໍ້າໃຈຮັບໃຊ້ຊາດ ແລະຮັບໃຊ້ປະຊາຊົນ ດ້ວຍຄວາມບໍລິສຸດໃຈ, ມີແບບແຜນດໍາລົງຊີວິດທີ່ສົດໃສແລະກ້າວໜ້າ, ມີມານະຈິດເຝິກຝົນຫຼໍ່ຫຼອມຕົນເອງ ແລະດຸໝັ່ນຄົ້ນຄວ້າຮໍ່າຮຽນ ຍົກລະດັບໃນທຸກໆດ້ານຢ່າງບໍ່ຢຸດຢັ້ງ, ມີສະຕິຕໍ່ການຈັດຕັ້ງ ແລະລະບຽບວິໄນ, ເຄົາລົບ ແລະປະຕິບັດກົດໝາຍ ແລະກົດລະບຽບຂອງພັກຢ່າງເຂັ້ມງວດ”[(4)].

ພັກເຮົາຖືວ່າການພັດທະນາຊັບພະຍາກອນມະນຸດແມ່ນປັດໃຈຕັດສິນການພັດທະນາປະເທດຊາດໃຫ້ມີຄວາມກ້າວໜ້າ, ມີຄວາມຈະເລີນຮຸ່ງເຮືອງສີວິໄລ ແລະບັນລຸຕາມເປົ້າໝາຍທີ່ວາງໄວ້ ໂດຍສະເພາະແມ່ນຍຸກໃໝ່ນີ້ ແຕ່ກ່ອນອື່ນໝົດນັ້ນແມ່ນຕ້ອງສຶກສາອົບຮົບພະນັກງານ ໃຫ້ມີສະຕິສູງຕໍ່ການຈັດຕັ້ງ, ມີຄວາມຕື່ນຕົວເຝິກຝົນຫຼໍ່ຫຼອມຊອກຮູ້ຮໍ່າຮຽນໃຫ້ມີຄວາມຮູ້, ຄວາມສາມາດ, ມີແບບແຜນວິທີເຮັດວຽກທີ່ຖືກຕ້ອງເພື່ອເຮັດໃຫ້ມີຄວາມເປັນເອກະພາບສູງຕໍ່ແນວທາງຂອງພັກ, ມີຄວາມຮູ້, ຄວາມເຂົ້າໃຈທາງດ້ານທິດສະດີມາກ-ເລນິນ, ມີຫົວຄິດປະດິດສ້າງໃນການປະຕິບັດໜ້າທີ່ວຽກງານຕ່າງໆ ເພາະວ່າພະນັກງານແມ່ນຜູ້ທີ່ນໍາແນວທາງ, ນະໂຍບາຍຂອງພັກ-ລັດໄປເຜີຍແຜ່, ຜັນຂະຫຍາຍ ເຊິ່ງປະທານ ໄກສອນ ພົມວິຫານຜູ້ນໍາທີ່ແສນເຄົາລົບຮັກຂອງເຮົາເຄີຍເວົ້າວ່າ: “ມາດຕະຖານອັນເປັນພື້ນຖານກ່ຽວກັບຄຸນສົມບັດ ແລະຄວາມສາມາດຂອງ

[(1)] ເອກະສານກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7, ປີ 2001, ໜ້າ 4

[(2)] ປຶ້ມລວບລວມເນື້ອໃນສໍາຄັນຂອງກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 8, ປີ 2009, ໜ້າ 17.

[(3)] ເອກະສານອົບຮົມພະນັກງານການນໍາ ປະຈໍາປີ 2000, ພິມປີ 2001, ໜ້າ 36.

[(4)] ເອກະສານກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ປີ 2011, ໜ້າ 53.

ພະນັກງານນຳພາ ແລະຄຸ້ມຄອງກ່ອນອື່ນໝົດແມ່ນຄວາມບໍລິສຸດສັດຊື່ຕໍ່ປະເທດຊາດ, ຕໍ່ພັກ, ມີຄວາມເປັນເອກະພາບສູງກັບແນວທາງ, ນະໂຍບາຍ ແລະບັນດາທັດສະນະຂອງພັກ, ຄຳສັ່ງຕ່າງໆຂອງລັດໃນຂອບເຂດວຽກງານທີ່ຕົນເອງຮັບຜິດຊອບຢ່າງມີປະສິດທິຜົນ, ຮູ້ເຕົ້າໂຮມປຸກລະດົມ ແລະເສີມຂະຫຍາຍສະຕິປັນຍາຂອງມະຫາຊົນ, ມີສະຕິສູງຕໍ່ການຈັດຕັ້ງພ້ອມກັນນັ້ນ, ກໍຕ້ອງມີແບບແຜນວິທີເຮັດວຽກທີ່ຕິດແທດກັບຕົວຈິງ, ມັກຄົ້ນຄວ້າຮ່ຳຮຽນ, ເຝິກຝົນຫຼໍ່ຫຼອມຕົນເອງ, ມີຄຸນສົມບັດສິນທຳປະຕິວັດ ແລະຍົກລະດັບຄວາມຮູ້, ຄວາມສາມາດຂອງຕົນເອງຂຶ້ນຢ່າງບໍ່ຢຸດຢັ້ງ”[1].

ພາຍໃຕ້ການໝູນໃຊ້ແນວຄິດໄກສອນ ພົມວິຫານ ແລະການນຳພາຂອງພັກ, ປະຊາຊົນລາວບັນດາເຜົ່າໄດ້ຜ່ານຜ່າຄວາມຫຍຸ້ງຍາກ, ສິ່ງທົດສອບນານາປະການ ແລະຍາດໄດ້ໄຊຊະນະອັນໃຫຍ່ຫຼວງ, ມີຄວາມໝາຍປະຫວັດສາດໃນການປະຕິບັດໜ້າທີ່ຍຸດທະສາດປົກປັກຮັກສາ ແລະສ້າງສາປະເທດຊາດ, ພັກເຮົາຍາມໃດກໍໄດ້ເອົາໃຈໃສ່ກໍ່ສ້າງ, ປັບປຸງກໍ່ສ້າງຕົນເອງຢ່າງເປັນປົກກະຕິຕາມຫຼັກມູນພື້ນຖານຂອງລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະບົດຮຽນອັນເປັນມູນເຊື້ອຂອງຕົນເອງ, ເຮັດໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ; ຮັກສາໄດ້ຄຸນທາດການເມືອງ, ທາດແທ້ປະຕິວັດ ແລະວິທະຍາສາດ ແລະອັນທີ່ເດັ່ນໆນັ້ນແມ່ນລັດຖະບານໄດ້ອອກດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນ, ດຳລັດວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ແລະດຳລັດວ່າດ້ວຍການເຝິກອົບຮົມ ແລະພັດທະນາພະນັກງານ-ລັດຖະກອນ.

ເພື່ອເສີມຂະຫຍາຍແນວຄິດທິດສະດີ ແລະແບບຢ່າງການນຳພາ-ຊີ້ນຳຂອງປະທານ ໄກສອນ ພົມວິຫານ ໃຫ້ສອດຄ່ອງກັບສະພາບຈຸດພິເສດຄວາມເປັນຈິງຄວນປະຕິບັດບາງວຽກງານດັ່ງນີ້:

1). ພະນັກງານທຸກຄົນຕ້ອງເປັນຄົນທີ່ມີຫຼັກໝັ້ນຊົນຊັ້ນປະຕິວັດ, ມີຄວາມສັດຊື່ສຸດຈະລິດ, ຂາວສະອາດ, ຈົງຮັກພັກດີຕໍ່ປະເທດຊາດ, ຕໍ່ພັກ-ລັດ, ມີຫຼັກໝັ້ນຊົນຊັ້ນປະຕິວັດທີ່ກ້າແກ່ນ, ຍຶດໝັ້ນໃນອຸດົມການສັງຄົມນິຍົມ, ມີຄວາມກ້າຫານ, ເດັດດ່ຽວໜຽວແໜ້ນຖະໜອມຖ່ອມຕົວ, ເຄົາລົບ ແລະປົກປັກຮັກສາສິ່ງຂອງສ່ວນລວມ, ປະຕິບັດກົດໝາຍ, ລະບຽບບ້ານເມືອງຢ່າງເຂັ້ມງວດ, ຕັ້ງໜ້າກໍ່ສ້າງວັດທະນະທຳໃໝ່ທີ່ມີເນື້ອໃນສັງຄົມນິຍົມ, ເສີມຂະຫຍາຍມໍລະດົກດ້ານວັດທະນະທຳອັນລ້ຳຄ່າຂອງຊາດ, ເສີມຂະຫຍາຍມູນເຊື້ອຮັກຊາດ, ມູນເຊື້ອອອກແຮງງານດຸໝັ່ນຂະຫຍັນໝັ່ນພຽນ ແລະມີຫົວຄິດປະດິດສ້າງໃນການດຳລົງຊີວິດ.

2). ຕ້ອງສ້າງແນວຄິດເປັນເຈົ້າ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານສ່ວນລວມ, ຮູ້ຈັກແຍກອັນໃດສ່ວນລວມ ແລະຮູ້ຈັກຜູກພັນອັນໃດເປັນສ່ວນຕົວຂອງຕົນ, ຕ້ອງຕ້ານກັບລັດທິເອກະຊົນ, ຕ້ານກະແສແນວຄິດທີ່ມີແຕ່ຮຽກຮ້ອງຄ່າຈ້າງລາງວັນ, ຕ້ອງສ້າງສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ, ຕ້ອງມີແບບວິທີ

(1) ປຶ້ມຄຸນສົມບັດຂອງປະທານ ໄກສອນ ພົມວິຫານ, ຄະນະຮັບຜິດຊອບສ້າງຫໍພິພິດຕະພັນ ໄກສອນ ພົມວິຫານ, ປີ 1995, ໜ້າ 61.

ອອກແຮງງານແບບໃໝ່, ມີຄຸນສົມບັດປະຕິວັດ ແລະນ້ຳໃຈເປັນເຈົ້າຕ້ອງກ້າສະແດງອອກ ກ່ອນອື່ນໝົດແບບຂອງວິທີການອອກແຮງງານແບບໃໝ່, ຕ້ອງຖືວ່າວຽກຂອງສ່ວນລວມ ເປັນຄືກັນກັບວຽກສ່ວນຕົວ.

3). ຕ້ອງມີຄວາມສາມັກຄີເປັນເອກະພາບ, ຍຶດໝັ້ນໃນຫຼັກການເຮັດວຽກງານ, ເສີມຂະຫຍາຍແນວຄິດຮັກຊາດ, ສົມທົບຢ່າງກົມກຽວກັບການສຶກສາອົບຮົມແນວຄິດສາກົນນິຍົມ, ຕ້ອງອີງໃສ່ກຳລັງແຮງຂອງມະຫາຊົນ, ຖືປະຊາຊົນເປັນກົກ, ຈາກປະຊາຊົນ ແລະຮັບໃຊ້ປະຊາຊົນ, ນັບຖື ແລະເຊື່ອໝັ້ນຕໍ່ບົດບາດ ຄວາມຮູ້, ຄວາມສາມາດຂອງບັນດາໝູ່ຄະນະ, ເຕົ້າໂຮມ ເພີ່ມທະວີຄວາມສາມັກຄີເປັນເອກະພາບບົນພື້ນຖານແນວທາງ, ນະໂຍບາຍ ແລະ ຫຼັກການລວມສູນປະຊາທິປະໄຕ.

4). ພະນັກງານ, ສະມາຊິກພັກທຸກສະຫາຍຕ້ອງເປັນແບບເປັນຢ່າງທີ່ດີໃຫ້ແກ່ມະຫາຊົນເພື່ອໃຫ້ມະຫາຊົນນັບຖື, ເຊື່ອໝັ້ນ ແລະ ໄວ້ວາງໃຈ. ຖ້າຫາກວ່າສະມາຊິກພັກບໍ່ເປັນແບບຢ່າງໃນການປະຕິບັດໜ້າທີ່ວຽກງານ ແລ້ວກໍຈະເຮັດໃຫ້ມະຫາຊົນບໍ່ນັບຖື ແລະກ່າວປະນາມ. ສະນັ້ນ, ພະນັກງານທຸກສະຫາຍບໍ່ວ່າຈະແມ່ນຢູ່ໃນຖານະຕຳແໜ່ງໃດກໍຕາມຕ້ອງໄດ້ຄົ້ນຄວ້າ, ກຳແໜ້ນແນວທາງຂອງພັກ, ກົດໝາຍ, ລະບຽບຂອງລັດ, ມີຄວາມຮັບຜິດຊອບສູງ ແລະເປັນຜູ້ນຳໜ້າໃນວຽກງານຕ່າງໆ.

5). ຕ້ອງມີຄວາມບໍລິສຸດສັດຊື່ຕໍ່ປະເທດຊາດ, ຕໍ່ປະຊາຊົນ, ຕໍ່ອຸດົມການຂອງພັກ-ລັດ, ມີຄວາມມານະອົດທົນ, ມີຫຼັກໝັ້ນຂອງຊົນຊັ້ນປະຕິວັດ, ມີຄວາມເປັນເອກະພາບສູງ ແລະຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ, ຄຳສັ່ງຕ່າງໆຂອງລັດໃນຂອບເຂດວຽກງານທີ່ຕົນເອງໄດ້ຮັບຜິດຊອບ, ຮູ້ເຕົ້າໂຮມປຸກລະດົມຄວາມສາມັກຄີ ແລະເສີມຂະຫຍາຍສະຕິປັນຍາຂອງມະຫາຊົນ, ມີສະຕິສູງຕໍ່ກັບການຈັດຕັ້ງ, ມີລະບຽບແບບແຜນວິທີການເຮັດວຽກທີ່ເປັນລະບົບແທດເໝາະກັບຕົວຈິງ.

6). ພະນັກງານທຸກຄົນຕ້ອງມີຫຼັກໝັ້ນຈຳແນກໄດ້ມິດສັດຕູຢ່າງຈະແຈ້ງ, ມີສະຕິຕໍ່ການຈັດຕັ້ງ, ລະບຽບວິໄນ ແລະມີນ້ຳໃຈຮັບຜິດຊອບ, ມີການພົວພັນຢ່າງສະໜິດແໜ້ນກັບມະຫາຊົນ, ເດັດດ່ຽວຕ້ານການດຳລົງຊີວິດຫຼິ້ນກິນຟຸມເຟືອຍ, ເສື່ອມຊາມ, ເກືອກກົ້ວເມົານຳແຕ່ຄວາມໂລບມາກໂລພາ, ຕັນຫາອັນຕ່ຳຊ້າ, ເພາະຈະພາພວກເຮົາໄປເຖິງ ບ່ອນເສື່ອມຄຸນປ່ຽນທາດ, ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດໄປໃນທາງທີ່ຜິດກົດໝາຍ, ຕ້ອງມີສະຕິລະວັງຕົວຕໍ່ກົນອຸບາຍຂອງພວກອິດທິກຳລັງປໍລະປັກທີ່ຫວັງມ້າງເພທຳລາຍ, ສ້າງຄວາມແຕກແຍກ, ໃສ່ຮ້າຍປ້າຍສີໃນທຸກໆຮູບແບບ.

ສະຫຼຸບແລ້ວ, ແນວຄິດໄກສອນ ພົມວິຫານ ຕໍ່ກັບການສຶກສາອົບຮົມພະນັກງານ ແມ່ນລະບົບແນວຄິດ, ທິດສະດີປະຕິວັດ, ແມ່ນສະຕິປັນຍາອັນສະຫຼາດແຫຼມຄົມ ໃນການສຶກສາອົບຮົມ, ສັ່ງສອນ, ເຮັດໃຫ້ພະນັກງານແຕ່ລະຄົນມີຄວາມເຊື່ອໝັ້ນຕໍ່ແນວທາງ, ນະໂຍບາຍຂອງພັກ ແລະກົດໝາຍ, ລະບຽບຕ່າງໆຂອງລັດ, ມີຄຸນທາດການເມືອງອັນໜັກແໜ້ນ, ເຊື່ອມຊຶມນ້ຳໃຈຮັກຊາດອັນດູດດື່ມ, ມີຄຸນສົມບັດສິນທຳປະຕິວັດອັນຜ່ອງໃສ, ພະນັກງານ, ສະມາຊິກພັກທຸກສະຫາຍຕ້ອງຮ່ຳຮຽນເອົາເປັນແບບຢ່າງ ແລະກຳແໜ້ນ ເພື່ອໝູນໃຊ້ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນໃຫ້ມີປະສິດທິຜົນ. ສະແດງອອກ "ແຕ່ປີ 1975 (ກ່ອນປົດ



ອ່ານຕໍ່ໜ້າ 85

# ເພີ່ມທະວີການໂຄສະນາເຜີຍແຜ່ສຶກສາອົບຮົມກົດໝາຍ ໃຫ້ປະຊາຊົນບັນດາເຜົ່າ ຢູ່ແຂວງໄຊຍະບູລີ ເພື່ອຍົກສູງ ສະຕິເຄົາລົບກົດໝາຍໃຫ້ສູງຂຶ້ນ

ຂຽນໂດຍ: ສົມຫວັງ ທໍ່

ການໂຄສະນາເຜີຍແຜ່ສຶກສາອົບຮົມກົດໝາຍໃຫ້ແກ່ປະຊາຊົນບັນດາເຜົ່າ ແມ່ນຂະບວນວິວັດແຫ່ງການກະທົບທີ່ມີທິດທາງຂອງຜູ້ໃຫ້ການສຶກສາອົບຮົມແນໃສ່ສ້າງຄວາມຮັບຮູ້ທາງດ້ານກົດໝາຍ ສະແດງເຖິງການຕໍ່ສູ້ໃນຂົງເຂດແນວຄິດ, ແມ່ນການເຊື່ອມຊຶມແນວທາງ, ສຶກສາອົບຮົມການເມືອງ-ແນວຄິດ ຫຼືເວົ້າອີກຢ່າງໜຶ່ງແມ່ນການຍົກສູງສະຕິຄວາມຮັບຮູ້ ແລະຄວາມເຂົ້າໃຈໃຫ້ແກ່ປະຊາຊົນບັນດາເຜົ່າໃຫ້ມີຄວາມເຊື່ອໝັ້ນຕໍ່ແນວທາງ, ນະໂຍບາຍຂອງພັກ, ເຂົ້າໃຈຕໍ່ກົດໝາຍ, ລະບຽບ, ຂອງລັດທີ່ວາງອອກແຕ່ລະສະໄໝໃຫ້ມີຄວາມເຂົ້າໃຈເປັນເອກະພາບກັນ ລະຫວ່າງຄວາມຮັບຮູ້ກັບການກະທຳ ໂດຍເລີ່ມຈາກຄວາມຮັບຮູ້ທາງດ້ານກົດໝາຍກ້າວໄປເຖິງການຕື່ນຕົວ ແລະການປະຕິບັດຈິນກາຍເປັນຄວາມຊິນເຄີຍໃນການປະພຶດຕາມກົດໝາຍ, ລະບຽບ, ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດນະໂຍບາຍ ແລະແນວທາງການປ່ຽນແປງໃໝ່ໃຫ້ເຂົ້າສູ່ລວງເລິກ ແນໃສ່ປັບປຸງອຳນາດແຫ່ງລັດໃຫ້ມີຄຸນນະພາບສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາສ້າງສາ ແລະພັດທະນາປະເທດຊາດກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມເທື່ອລະກ້າວ.

ວຽກງານໂຄສະນາເຜີຍແຜ່ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນ, ເປັນພື້ນຖານໃນຂະບວນການສ້າງລັດທີ່ປົກຄອງດ້ວຍກົດໝາຍ, ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ໄດ້ກຳນົດທັດສະນະ ແລະແຜນນະໂຍບາຍໃຫຍ່ໃນບາງຈຸດໂດຍເນັ້ນວ່າ: "ຄຸ້ມຄອງ, ບໍລິຫານລັດໃຫ້ມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະເຂັ້ມງວດ"(1) ເພື່ອປະຕິບັດຕາມເນື້ອໃນຂອງກອງປະຊຸມດັ່ງກ່າວກໍໄດ້ສຸມໃສ່ວຽກງານກົດໝາຍ ນຳເອົາບັນດານິຕິກຳ ແລະກົດໝາຍລົງເຜີຍແຜ່ຢູ່ທ້ອງຖິ່ນ ແລະຮາກຖານດ້ວຍຫຼາຍວິທີ, ຫຼາຍຮູບການ ໂດຍສະເພາະແມ່ນຂະແໜງຍຸຕິທຳນັບແຕ່ສູນກາງລົງຮອດທ້ອງຖິ່ນ, ເປັນເຈົ້າການໃນການໂຄສະນາເຜີຍແຜ່ກົດໝາຍ ທັງຊຸກຍູ້ໃຫ້ຂະແໜງການຕ່າງໆເອົາໃຈໃສ່ໃນການໂຄສະນາເຜີຍແຜ່ກົດໝາຍທີ່ຕົນຮັບຜິດຊອບໃຫ້ທົ່ວເຖິງ ເຊິ່ງໃນມະຕິ 037/ຄບສພ, ວ່າດ້ວຍການຍົກສູງປະສິດທິພາບຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດ

(1) ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 194.

ໝາຍກຳນົດວ່າ: “ຄະນະພັກ, ອົງການອຳນາດລັດທຸກຂັ້ນຕ້ອງເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍໃຫ້ກວ້າງຂວາງທົ່ວເຖິງທຸກພາກສ່ວນຢ່າງເລິກເຊິ່ງ ດ້ວຍຫຼາຍຮູບການ, ຫຼາຍວິທີການທີ່ແທດເໝາະກັບສະພາບຕົວຈິງ ແນໃສ່ຍົກສູງລະດັບຄວາມຮູ້, ສະຕິຕື່ນຕົວເປັນເຈົ້າການເຄົາລົບ ແລະປະຕິບັດກົດໝາຍຂອງພົນລະເມືອງລາວ, ສຶກສາອົບຮົມກົດໝາຍໃຫ້ພະນັກງານນຳພາ, ຄຸ້ມຄອງ ແລະເຈົ້າໜ້າທີ່ຂັ້ນຕ່າງໆຢ່າງທົ່ວເຖິງ. ຂະແໜງການ, ອົງການຕ່າງໆທຸກຂັ້ນ ຕ້ອງຕັ້ງໜ້າເຄື່ອນໄຫວໃຫ້ຖືກຕ້ອງເຕັມສ່ວນຕາມພາລະບົດບາດ, ສິດ ແລະໜ້າທີ່ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ຍົກສູງຄວາມເປັນເຈົ້າການໃນການສຶກສາອົບຮົມກົດໝາຍ, ໂຄສະນາເຜີຍແຜ່ ແລະຈັດຕັ້ງປະຕິບັດກົດໝາຍຂອງຕົນຢ່າງມີປະສິດທິພາບ”(1) ຈຸດປະສົງເພື່ອ “ແນໃສ່ເຮັດໃຫ້ພົນລະເມືອງຮັບຮູ້, ເຂົ້າໃຈ, ມີສະຕິເຄົາລົບ ແລະປະຕິບັດກົດໝາຍຢ່າງເລິກເຊິ່ງ, ກວ້າງຂວາງ ແລະທົ່ວເຖິງ; ຕ້ານ ແລະສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ; ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະຄວາມຍຸຕິທຳ”(2); ປັດຈຸບັນ ສປປ ລາວມີ “ກົດໝາຍທີ່ຮັບຮອງ ແລະປະກາດໃຊ້ທັງໝົດ 194 ສະບັບ; ໃນນີ້, ກົດໝາຍຂອງຂົງເຂດການປົກຄອງ ແລະຍຸຕິທຳ ຈຳນວນ 43 ກົດໝາຍ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 13 ກົດໝາຍ, ຂົງເຂດເສດຖະກິດ ຈຳນວນ 90 ກົດໝາຍ, ຂົງເຂດວັດທະນະທຳ-ສັງຄົມ ຈຳນວນ 44 ກົດໝາຍ ແລະຂົງເຂດຕ່າງປະເທດ ຈຳນວນ 4 ກົດໝາຍ”(3). ບັນດາກົດໝາຍທີ່ປະກາດໃຊ້ລ້ວນແຕ່ສ່ອງແສງເຖິງແນວທາງ ແລະໝາກຜົນຂອງການປະຕິວັດທີ່ສອດຫ້ອຍ, ແຊກຊຶມເຂົ້າທຸກຂົງເຂດວຽກງານ ແລະຊີວິດຕົວຈິງຂອງສັງຄົມ.

ແຂວງໄຊຍະບູລີ ຕັ້ງຢູ່ທິດຕາເວັນຕົກສ່ຽງເໜືອຂອງ ສປປ ລາວ ຢູ່ຝັ່ງຂວາຂອງແມ່ນ້ຳຂອງ ມີຊາຍແດນຕິດຈອດຄື: “ທິດເໜືອຕິດກັບແຂວງບໍ່ແກ້ວ, ທິດຕາເວັນອອກຕິດກັບແຂວງອຸດົມໄຊ, ແຂວງຫຼວງພະບາງ ແລະແຂວງວຽງຈັນ, ທິດຕາເວັນຕົກຕິດກັບ 6 ແຂວງຂອງລາຊະອານາຈັກໄທ; ແຂວງໄຊຍະບູລີ; ປະກອບມີ 11 ເມືອງ ຄື: ເມືອງໄຊຍະບູລີ, ເມືອງພຽງ, ເມືອງປາກລາຍ, ເມືອງທົ່ງມີໄຊ, ເມືອງແກ່ນທ້າວ, ເມືອງບໍ່ແຕນ, ເມືອງໄຊສະຖານ, ເມືອງຫົງສາ, ເມືອງເງິນ, ເມືອງຊຽງຮ່ອນ ແລະເມືອງຄອບປະກອບດ້ວຍ 8 ເຜົ່າຄື: ເຜົ່າລາວ, ເຜົ່າໄຕດຳ, ເຜົ່າມົ້ງ, ເຜົ່າກຶມມຸ, ເຜົ່າລື້, ເຜົ່າຍວນ, ເຜົ່າອິວມຽນ, ເຜົ່າໄປຣ ພິເສດແຂວງ

(1) ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ສະບັບເລກທີ 037/ ຄບສພ, ລົງວັນທີ 18 ມິຖຸນາ 2018 ວ່າດ້ວຍການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ.

(2) ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ ເລກທີ 562/ລບ, ລົງວັນທີ 06/11/2020, ມາດຕາ 1, ໜ້າ 1.

(3) ຂໍ້ມູນເວັບໄຊຂອງສະພາແຫ່ງຊາດ www. Na.gov.la.

(4) ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງແຂວງໄຊຍະບູລີ, ປີ 2023, ໜ້າ 1.

ໄຊຍະບູລີ ຍັງມີຊົນເຜົ່າກຣີຈຳນວນໜຶ່ງ (ເຜົ່າຕອງເຫຼືອງ ຫຼື ຄົນປ່າ); ມີ 430 ບ້ານ, 80.259 ຄອບຄົວ, ມີພົນລະເມືອງທັງໝົດ 417.974 ຄົນ, ຍິງ 20.674 ຄົນ"[4]. ດັ່ງນັ້ນ, ເພື່ອເຮັດໃຫ້ແຂວງໄຊຍະບູລີ ມີຄວາມສະຫງົບສຸກ ແລະ ເປັນລະບຽບຮຽບຮ້ອຍ, ມີຄວາມຍຸຕິທຳ, ປາກົດການຫຍໍ້ທໍ້ນັບມື້ຫຼຸດລົງເວົ້າລວມ, ເວົ້າສະເພາະແມ່ນໃຫ້ປະຊາຊົນບັນດາເຜົ່າມີສະຕິເຄົາລົບກົດໝາຍສູງຂຶ້ນກວ່າເກົ່າ ໃນໄລຍະຜ່ານມາຄະນະພັກ, ຄະນະນຳແຂວງໄຊຍະບູລີ ກໍຄືພະແນກຍຸຕິທຳ ໄດ້ເປັນເຈົ້າການປະສານສົມທົບກັບບັນດາພະແນກການຂອງແຂວງ ແລະຫ້ອງການຕ່າງໆຂອງເມືອງໃນທົ່ວແຂວງເອົາໃຈໃສ່ໃນການສ້າງແຜນການເຄື່ອນໄຫວການລົງໂຄສະນາເຜີຍແຜ່ກົດໝາຍດ້ວຍຫຼາຍຮູບ, ຫຼາຍສີ, ຫຼາຍວິທີການຢ່າງກວ້າງຂວາງ ປະສານງານກັບອົງການປົກຄອງບ້ານເຕົ້າໂຮມປະຊາຊົນເຂົ້າຮ່ວມຮັບຟັງແນວທາງ, ນະໂຍບາຍຂອງພັກ, ກົດໝາຍຂອງລັດມາເຜີຍແຜ່ ແລະສອດຫ້ອຍເຂົ້າທຸກຂົງເຂດວຽກງານ, ການດຳລົງຊີວິດຂອງສັງຄົມ. ເພື່ອເຮັດໃຫ້ປະຊາຊົນມີການຫັນປ່ຽນທາງດ້ານແນວຄິດ ແລະພຶດຕິກຳ, ຮູ້ຈຳແນກໄດ້ມິດ-ສັດຕູ, ເປັນເຈົ້າການເຂົ້າຮ່ວມທຸກຂະບວນການຢູ່ທ້ອງຖິ່ນຂອງຕົນ ສະແດງອອກໃນໄລຍະ 1 ປີ ພະແນກຍຸຕິທຳແຂວງ "ໂຄສະນາສຶກສາອົບຮົມເຜີຍແຜ່ກົດໝາຍໃຫ້ພະນັກງານຂອງເມືອງ ພາຍໃນແຂວງໄດ້ 11 ຄັ້ງ, ມີຜູ້ເຂົ້າຮ່ວມຮັບຟັງ 1.383 ຄົນ, ຍິງ 356 ຄົນ; ຂຽນບົດຂ່າວສິ່ງກົມໂຄສະນາເຜີຍແຜ່ກົດໝາຍ ແລະສະຖານີວິທະຍຸໂທລະພາບແຂວງແຂວງໄຊຍະບູລີໄດ້ 25 ບົດ; ບັນດາຫ້ອງການຍຸຕິທຳເມືອງ ລົງໂຄສະນາເຜີຍແຜ່ກົດໝາຍໃຫ້ພໍ່ແມ່ປະຊາຊົນຢູ່ບັນດາບ້ານໃນທົ່ວແຂວງໄດ້ 176 ບ້ານ, ມີຜູ້ເຂົ້າຮ່ວມທັງໝົດ 9.257 ຄົນ, ຍິງ 4.980 ຄົນ; ໄດ້ໂຄສະນາເຜີຍແຜ່ກົດໝາຍ ຢູ່ໂຮງຮຽນໄດ້ 15 ແຫ່ງ, ມີຄູ-ອາຈານ ແລະນ້ອງນັກຮຽນເຂົ້າຮ່ວມທັງໝົດ 1.3012 ຄົນ, ຍິງ 5.629 ຄົນ; ໂຄສະນາເຜີຍແຜ່ກົດໝາຍໃຫ້ນັກໂທດ, ນັກຮຽນດັດສ້າງ ແລະຜູ້ຕ້ອງຫາຢູ່ຄ້າຍຄຸມຂັງດັດສ້າງເມືອງໄດ້ 1 ຄັ້ງ, ມີນັກໂທດ, ນັກຮຽນດັດສ້າງ ແລະຜູ້ຖືກຕ້ອງຫາເຂົ້າຮ່ວມທັງໝົດ 362 ຄົນ, ຍິງ 52 ຄົນ; ໂຄສະນາຜ່ານທາງວິທະຍຸ FM ຂອງເມືອງ (ກະຈາຍຂ່າວໃນເວລາ 17:00 ຫາ 17:30), ເປັນ 3 ພາສາ ຄື: ພາສາລາວ, ພາສາກຶມມຸ ແລະພາສາມົ້ງ; ໂຄສະນາເຜີຍແຜ່ກົດໝາຍຜ່ານໂທລະໂຄ່ງຂອງເມືອງ (ເທດສະບານເມືອງ) ແຕ່ວັນຈັນຮອດວັນສຸກ (ເວລາ 12:00 ຫາ 12:30 ນາທີ) ໄດ້ 19 ຄັ້ງ ແລະໂຄສະນາເຜີຍແຜ່ກົດໝາຍຜ່ານທາງໂທລະໂຄ່ງຂອງບ້ານແຕ່ວັນຈັນຮອດວັນສຸກ (ເວລາ 18:00 ຫາ 18:30 ນາທີ) ໄດ້ 85 ຄັ້ງ, ຂຶ້ນຫ້ອງສອນວິຊາກົດໝາຍໃຫ້ລະບົບ 45 ວັນໄດ້ 1.436 ຊົ່ວໂມງ ແລະແຈກຢາຍປຶ້ມກົດໝາຍໄດ້ 563 ຫົວ ແລະວາລະສານກົດໝາຍຈຳນວນ 445 ຫົວ ແລະສ້າງຕູ້ກົດໝາຍປະຈຳບ້ານໄດ້ 156 ບ້ານ"[1]. ຜ່ານການໂຄສະນາເຜີຍແຜ່, ເຊື່ອມຊຶມກົດໝາຍໃຫ້ພໍ່ແມ່, ປະຊາຊົນບັນດາເຜົ່າດ້ວຍຫຼາຍຮູບ, ຫຼາຍສີ ເຫັນໄດ້ວ່າປະຊາຊົນບັນດາເຜົ່າພາຍໃນແຂວງໄຊຍະບູລີແມ່ນມີສະຕິເຄົາລົບ ແລະປະຕິບັດກົດ

---

[1] ບົດສະຫຼຸບວຽກງານໂຄສະນາເຜີຍແຜ່ກົດໝາຍຂອງພະແນກຍຸຕິທຳແຂວງໄຊຍະບູລີ, ປະຈຳປີ 2023, ໜ້າ 2.

ໝາຍຫຼາຍຂຶ້ນກວ່າເກົ່າ ທັງໄດ້ຮັບຮູ້ ແລະເຂົ້າໃຈແນວທາງ, ນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະລະບຽບການຂອງລັດ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ປະຕິບັດລັດຖະທຳມະນູນ ແລະກົດໝາຍທີ່ວາງອອກຢ່າງເຂັ້ມງວດ, ບັນດາປາກົດການຫຍໍ້ທໍ້ເຊັ່ນ: ຂໍ້ຂັດແຍ່ງພາຍໃນຄອບຄົວ, ຂໍ້ຂັດແຍ່ງພາຍໃນບ້ານ, ບັນຫາຂີ້ລັກ, ງັດແງະ, ບັນຫາຢາເສບຕິດຄ່ອຍໆຫຼຸດລົງເທື່ອລະກ້າວ, ສັງຄົມເປັນລະບຽບຮຽບຮ້ອຍ ແລະສະຫງົບໂດຍພື້ນຖານ.

ການໂຄສະນາເຜີຍແຜ່ສຶກສາອົບຮົມກົດໝາຍ ໃຫ້ປະຊາຊົນບັນດາເຜົ່າຢູ່ແຂວງໄຊຍະບູລີ ເຖິງຈະມີຜົນສຳເລັດຫຼາຍດ້ານ ແຕ່ກໍຍັງມີຂໍ້ຄ້າງຄາຈຳນວນໜຶ່ງທີ່ຈຳເປັນຄວນໄດ້ຮັບການປັບປຸງແກ້ໄຂດັ່ງນີ້:

ໜຶ່ງ, ການໂຄສະນາເຜີຍແຜ່ກົດໝາຍເພື່ອສຶກສາອົບຮົມປະຊາຊົນຍັງບໍ່ທັນຮັບປະກັນໄດ້ຄຸນນະພາບ ແລະມີຫຼາຍຮູບ, ຫຼາຍສີ ສະແດງອອກຍັງເນັ້ນໃສ່ແຕ່ການອ່ານມາດຕາກົດໝາຍ, ຜູ້ເຂົ້າຮ່ວມຮັບຟັງຍັງບໍ່ຖືກຕາມເປົ້າໝາຍ ໃນໄລຍະຜ່ານມາຜູ້ທີ່ເຂົ້າຮ່ວມ ສ່ວນຫຼາຍເປັນຜູ້ອາວຸດໂສ.

ສອງ, ແຂວງໄຊຍະບູລີ ເປັນແຂວງໜຶ່ງທີ່ປະກອບດ້ວຍຫຼາຍຊົນເຜົ່າ, ດຳລົງຊີວິດກະແຈກກະຈາຍ ແລະມີຮີດຄອງແຕກຕ່າງກັນ, ລະດັບການສຶກສາກໍແຕກຕ່າງກັນ ແລະບັນດາເມືອງຈຳນວນໜຶ່ງ ເປັນເມືອງພູດອຍ ເສັ້ນທາງທ່ຽວໄປ-ມາ ລະຫວ່າງເມືອງຫາບ້ານຍັງຫຍຸ້ງຍາກ. ສະນັ້ນ, ຈຶ່ງເປັນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ກັບການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ກົດໝາຍເຮັດໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ເປັນປົກກະຕິ,

ສາມ, ອົງການຈັດຕັ້ງບາງຂະແໜງການ, ອົງການ, ກົມກອງ ແລະຫ້ອງການ ຍັງຖືເບົາຕໍ່ວຽກງານໂຄສະນາເຜີຍແຜ່ກົດໝາຍ ສະແດງອອກ ບໍ່ເປັນເຈົ້າການນຳເອົາກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໄປໂຄສະນາເຜີຍແຜ່ໃຫ້ປະຊາຊົນ; ກົດໝາຍ ຫຼື ນິຕິກຳທີ່ສ້າງຂຶ້ນບໍ່ທັນເຂົ້າເຖິງຊີວິດຕົວຈິງຂອງສັງຄົມ, ປະຊາຊົນຂາດການບໍລິໂພກຂໍ້ມູນຂ່າວສານຈາກພາກລັດຖະບານ, ການຕອບບັນຫາ ຫຼື ແກ້ຂ່າວທີ່ບໍ່ມີມູນຄວາມຈິງຍັງຊັກຊ້າ ແລະບໍ່ທັນການ. ສະນັ້ນ, ບາງຄັ້ງເຮັດໃຫ້ເຂົາເຈົ້າເຂົ້າໃຈບໍ່ຖືກຕ້ອງຕໍ່ແນວທາງ ແລະເປັນຊ່ອງຫວ່າງໃຫ້ກຸ່ມຄົນບໍ່ດີສວຍໃຊ້.

ສີ່, ພະນັກງານ-ລັດຖະກອນຈຳນວນໜຶ່ງຄວາມຮູ້, ຄວາມສາມາດບໍ່ທັນສູງ; ຜູ້ທີ່ຮັບຜິດຊອບວຽກໂຄສະນາເຜີຍແຜ່ກົດໝາຍຢູ່ບາງຂະແໜງການຍັງບໍ່ໄດ້ຜ່ານວິຊາສະເພາະດ້ານກົດໝາຍ.

ເພື່ອເພີ່ມທະວີການໂຄສະນາເຜີຍແຜ່ສຶກສາອົບຮົມກົດໝາຍໃຫ້ປະຊາຊົນບັນດາເຜົ່າຢູ່ແຂວງໄຊຍະບູລີ ໃນຕໍ່ໜ້າໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່ານັ້ນຜູ້ຂຽນມີບາງທັດສະນະດັ່ງນີ້

1). ເພື່ອປະຊາຊົນບັນດາເຜົ່າມີສະຕິເຄົາລົບກົດໝາຍຫຼາຍຂຶ້ນກວ່າເກົ່າ ແລະທົ່ວເຖິງນັ້ນ, ຄວນສ້າງແຜນການລະອຽດກ່ຽວກັບການໂຄສະນາເຜີຍແຜ່ກົດໝາຍ, ກຳນົດແຕ່ລະກຸ່ມເປົ້າໝາຍໃຫ້ຊັດເຈນ ແລະເຮັດຫຼາຍຮູບຫຼາຍສີ ເນື່ອງຈາກວ່າກົດໝາຍມີຫຼາຍຂົງເຂດ ແລະປະຊາຊົນກໍມີລະດັບຄວາມຮັບຮູ້ແຕກຕ່າງກັນ; ພ້ອມນັ້ນ, ກໍຕ້ອງມີການຕິດຕາມ, ກວດກາ ແລະປະເມີນຜົນ ເພື່ອປະເມີນຄວາມຮັບຮູ້ ແລະເຂົ້າໃຈຂອງປະຊາຊົນ.

2). ກົດໝາຍ ຫຼື ນິຕິກຳໃຕ້ກົດໝາຍ

ທີ່ມີຜົນສັກສິດຕ້ອງໄດ້ນຳໄປໂຄສະນາເຜີຍແຜ່ໃຫ້ປະຊາຊົນບັນດາເຜົ່າໄດ້ຮັບຮູ້ ແລະເຂົ້າໃຈ, ເຮັດໃຫ້ກົດໝາຍ ແລະນິຕິກຳໃຕ້ກົດໝາຍແຊກຊຶມເຂົ້າໃນການດຳລົງຊີວິດຂອງສັງຄົມແນໃສ່ສຶກສາອົບຮົມປະຊາຊົນບັນດາເຜົ່າເຄົາລົບ, ປະຕິບັດກົດໝາຍ ໃຫ້ກາຍເປັນຄວາມຊິນເຄີຍ ແລະເປັນນິໄສ.

3). ວຽກງານສຶກສາອົບຮົມກົດໝາຍແກ່ປະຊາຊົນບັນດາເຜົ່າ ບໍ່ແມ່ນຄວາມຮັບຜິດຊອບຂອງອົງການໃດໜຶ່ງ ແຕ່ແມ່ນໜ້າທີ່ຂອງທຸກພາກສ່ວນ. ສະນັ້ນ, ກົດໝາຍ ຫຼື ນິຕິກຳຢູ່ໃນຄວາມຮັບຜິດຊອບຂອງອົງການໃດ ອົງການນັ້ນຕ້ອງເປັນເຈົ້າການໃນການໂຄສະນາເຜີຍແຜ່ກົດໝາຍໃນຂະແໜງການຕົນໃຫ້ມີຄວາມເລິກເຊິ່ງ, ກວ້າງຂວາງ ເພື່ອເຮັດໃຫ້ສະຕິການເຄົາລົບ ແລະປະຕິບັດກົດໝາຍໃນທົ່ວສັງຄົມນັບມື້ສູງຂຶ້ນ.

4). ເພີ່ມທະວີການເຝິກອົບຮົມວຽກງານໂຄສະນາເຜີຍແຜ່ກົດໝາຍໃຫ້ພະນັກງານທີ່ເຮັດວຽກໂຄສະນາເຜີຍແຜ່ກົດໝາຍຕ້ອງເຂົ້າໃຈ ແລະກຳແໜ້ນແນວທາງ, ນະໂຍບາຍຂອງພັກ, ຮັບຮູ້ ແລະເຂົ້າໃຈກົດໝາຍໃນລະດັບທີ່ແນ່ນອນສາມາດອະທິບາຍ, ຊີ້ແຈງເຫດຜົນ, ແກ້ໄຂຂໍ້ຂັດແຍ່ງໄດ້ດ້ວຍວິທີປານີປານອມ ແລະສັນຕິວິທີ, ບໍ່ເຂົ້າຂ້າງຝ່າຍໃດຝ່າຍໜຶ່ງສາມາດເປັນທີ່ເພິ່ງຂອງປະຊາຊົນໄດ້ເປັນຢ່າງດີ.

ສັງລວມແລ້ວ, ການໂຄສະນາເຜີຍແຜ່ສຶກສາອົບຮົມກົດໝາຍໃຫ້ປະຊາຊົນບັນດາເຜົ່າຢູ່ແຂວງໄຊຍະບູລີ ແມ່ນວຽກບຸລິມະສິດໜຶ່ງທີ່ສຳຄັນໃນການເອົາເນື້ອໃນຈິດໃຈຂອງລັດຖະທຳມະນູນ, ກົດໝາຍ ແລະນິຕິກຳໃຕ້ກົດໝາຍລົງສູ່ຮາກຖານປະຊາຊົນ ດ້ວຍການອະທິບາຍ, ຊີ້ແຈງ, ແນະນຳໂດຍຜ່ານຮູບການໂຄສະນາເຜີຍແຜ່ທີ່ເໝາະສົມກັບສະພາບຈຸດພິເສດຂອງແຕ່ລະທ້ອງຖິ່ນໃຫ້ຮັບຮູ້, ເຂົ້າໃຈສິດ ແລະພັນທະຂອງຕົນໃນການດຳລົງຊີວິດຢູ່ໃນສັງຄົມ, ສ້າງສະຕິເຄົາລົບ ແລະປະຕິບັດກົດໝາຍໃຫ້ພົນລະເມືອງທຸກຄົນ ເພື່ອເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະຍຸຕິທຳ ປະກອບສ່ວນໃນການຮັບປະກັນການສ້າງຄວາມສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າ ເພື່ອເປັນອັນໜຶ່ງອັນດຽວກັນໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແລະມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງແຂວງໃຫ້ປາກົດຜົນເປັນຈິງເທື່ອລະກ້າວ.